ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນການ

# ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ

# ສໍາລັບປີ 2016-2020 ແລະ ວິໄສທັດ ຮອດປີ 2030

ຄະນະກຳມະການຄຸ້ມຄອງແຫ່ງຊາດ

ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ, 2016

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ

ເລກທີ: 02 /ຄຊກລ

ນະຄອນຫລວງວຽງຈັນ, ວັນທີ 23 ກຸມພາ 2017

# ແຜນການ

# ແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ

# ສຳລັບປີ 2016-2020 ແລະ ວິໄສທັດ ຮອດປີ 2030

# ສາລະບານ


I. ປະຫວັດຄວາມເປັນມາ……………………………………………………………………….1

II. ຕີລາຄາຜົນສຳເລັດການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ ແກ້ໄຂບັນຫາລະເບີດບໍ່ທັນແຕກ ໃນໄລຍະ 2011-2015……………………………………………………………………….2

1. ຢືນຢັນຄາດໝາຍແຜນຍຸດທະສາດແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາລະເບີດບໍ່ທັນແຕກ ສຳລັບປີ 2011-2020……………………………………………………….2
2. ຜົນສຳເລັດ……………………………………………………………………….2
3. ຂໍ້ຄົງຄ້າງ ແລະ ສາເຫດ………………………………………………………………….9
4. ບົດຮຽນຖອດຖອນໄດ້………………………………………………………………….10
5. ສິ່ງທ້າທາຍ……………………………………………………………………….10

III. ແຜນການແກ້ໄຂບັນຫາລະເບີດບໍ່ທັນແຕກ ສຳລັບປີ 2016-2020………………………………….11

1. ບ່ອນອີງ……………………………………………………………………….11
2. ທິດທາງໜ້າທີ່ລວມ………………………………………………………………….11
3. ຄາດໝາຍຕົ້ນຕໍ………………………………………………………………….11
4. ວຽກຈຸດສຸມແຕ່ລະດ້ານ………………………………………………………………….12
5. ວຽກຈຸດສຸມສຳລັບປີ 2016………………………………………………………………….17

IV. ວິໄສທັດ ຮອດປີ 2030……………………………………………………………………….20

V. ມາດຕະການ, ກົນໄກການປະຕິບັດ ແລະ ການຕິດຕາມປະເມີນຜົນ…………………………….21

ບັນດາເອກະສານຊ້ອນທ້າຍ

1. ຕາຕະລາງຕົວຊີ້ວັດຜົນສຳເລັດ
2. ບັນຊີແຂວງ, ເມືອງ ແລະ ບ້ານ ທີ່ມີຮ່ອງຮອຍລະເບີດບໍ່ທັນແຕກຕົກຄ້າງ

**I. ປະຫວັດຄວາມເປັນມາ.**

ຖ້າສະເລ່ຍໃສ່ຫົວຄົນແລ້ວ ສປປ ລາວ ເປັນປະເທດທີ່ຖືກຖິ້ມລະເບີດຫຼາຍທີ່ສຸດໃນໂລກ. ໃນສົງຄາມອິນດູຈີນ ໄລຍະແຕ່ປີ 1964 ເຖິງປີ 1973 ປະເທດລາວ ໄດ້ກາຍເປັນສະໜໍລະພູມສູ້ຮົບທາງພາກພື້ນດິນ ແລະ ທາງອາກາດຢ່າງຮ້າຍແຮງ. ຕາມຂໍ້ມູນທີ່ບັນທຶກໄວ້ ໄດ້ມີການຖິ້ມລະເບີດຫຼາຍກວ່າສອງລ້ານໂຕນ ໃນນັ້ນ ມີບົມໃຫຍ່ປະມານ 4 ລ້ານໜ່ວຍ ແລະ ລະເບີດລູກຫວ່ານ (ທີ່ຮູ້ກັນທົ່ວໄປວ່າ ບົມບີ) ຫຼາຍກວ່າ 270 ລ້ານໜ່ວຍ, ນັກວິຊາການຄາດຄະເນວ່າ ປະມານ 30 ສ່ວນຮ້ອຍຂອງລະເບີດດັ່ງກ່າວ ແມ່ນຍັງບໍ່ທັນແຕກ.

ຍ້ອນລະເບີດລູກຫວ່ານ ຕົກຄ້າງຢ່າງຫຼວງຫຼາຍ ແລະ ກະຈາຍຢູ່ບໍລິເວນກ້ວາງ ຈຶ່ງສົ່ງຜົນກະທົບຕໍ່ຊີວິດຂອງປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ, ເຮັດໃຫ້ມີຜູ້ຖືກບາດເຈັບ ແລະ ເສຍຊີວິດ ປະມານ 20,000 ຄົນ ພາຍຫຼັງສົງຄາມໄດ້ສິ້ນສຸດ.

ລະເບີດບໍ່ທັນແຕກ (ລບຕ) ໂດຍສະເພາະແມ່ນລະເບີດລູກຫວ່ານ ຍັງສືບຕໍ່ສົ່ງຜົນກະທົບຢ່າງໜັກໜ່ວງຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນ ແລະ ເປັນອຸປະສັກຂັດຂວາງການບັນລຸການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ທີ່ຈະເຮັດໃຫ້ ສປປ ລາວ ສາມາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2020.

ພາຍຫຼັງສົງຄາມໄດ້ສິ້ນສຸດລົງໃນປີ 1975 ລັດຖະບານ ສປປ ລາວ (ລັດຖະບານ) ໄດ້ມີຄວາມພະຍາຍາມໃນການແກ້ໄຂບັນຫາ ລບຕ. ຕົກມາຮອດຊຸມປີ 1990 ການແກ້ໄຂບັນຫາ ລບຕ ແມ່ນເລີ່ມຈາກການຊ່ວຍເຫຼືອຂອງສາກົນ ໂດຍເບື້ອງຕົ້ນຜ່ານອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂອງຕ່າງປະເທດ ແລະ ຕໍ່ມາ ກໍ່ຜ່ານການຊ່ວຍເຫຼືອຂອງປະເທດຕ່າງໆ ແລະ ອົງການ ສປຊ. ໃນປີ 1996 ໂດຍໄດ້ຮັບການສະໜັບສະໜູນຈາກອົງການ ສປຊ ແລະ ອົງການຢູນິເຊບ ລັດຖະບານ ໄດ້ສ້າງຕັ້ງໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ຂຶ້ນ ເພື່ອເຮັດໜ້າທີ່ໃນການເກັບກູ້ ລບຕ ແລະ ດໍາເນີນການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ປະຊາຊົນລາວບັນດາເຜົ່າ.

ຕົກມາປີ 2003, ແຜນຍຸດທະສາດແຫ່ງຊາດ ເພື່ອການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ທີ່ໃສ່ຊື່ວ່າ "ເສັ້ນທາງກ້າວສູ່ຄວາມປອດໄພ" ສໍາລັບປີ 2003-2013 ໄດ້ຖືກຮັບຮອງ. ຫຼັງຈາກນັ້ນ, ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ໄດ້ຖືກສ້າງຕັ້ງຂຶ້ນ ເພື່ອເຮັດໜ້າທີ່ໃນການຊີ້ນໍາ, ຄຸ້ມຄອງ ແລະ ປະສານງານກ່ຽວກັບກິດຈະກໍາທັງໝົດທີ່ກ່ຽວຂ້ອງກັບການແກ້ໄຂບັນຫາ ລບຕ ໃນຂອບເຂດທົ່ວປະເທດ. ພ້ອມນັ້ນ, ກໍ່ເກີດມີຫຼາຍອົງການປະຕິບັດງານ (ອົງການປະຕິບັດງານໝາຍເຖິງອົງການປະຕິບັດເຮັດໜ້າທີ່ສໍາຫຼວດ-ກວດກູ້, ໂຄສະນາທີ່ມາ ແລະ ຜົນຮ້າຍ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ບັນດາບໍລິສັດເກັບກູ້ ລບຕ) ປະຕິບັດການແກ້ໄຂບັນຫາ ລບຕ ຢູ່ໃນ ສປປ ລາວ.

ສິ່ງທີ່ໜ້າເປັນຫ່ວງແມ່ນ ປະຊາຊົນລາວບັນດາເຜົ່າ ຍັງໄດ້ຮັບຜົນກະທົບຢ່າງຮ້າຍແຮງຈາກ ລບຕ ເຖິງແມ່ນວ່າ ສົງຄາມໄດ້ສິ້ນສຸດລົງແລ້ວກໍ່ຕາມ ແຕ່ກໍ່ຍັງມີຜູ້ຖືກບາດເຈັບ ແລະ ເສຍຊີວິດ ໂດຍສະເພາະແມ່ນລະເບີດລູກຫວ່ານ ທີ່ຍັງຕົກຄ້າງ ເປັນຈໍານວນຫຼາຍຢູ່ໃນ ສປປ ລາວ ແລະ ຢູ່ໃນບັນດາປະເທດໃນໂລກ. ດັ່ງນັ້ນ, ລັດຖະບານລາວ ຈຶ່ງມີຄວາມຕັ້ງໜ້າສະໜັບສະໜູນສົນທິສັນຍາຕ້ານລະເບີດລູກຫວ່ານ. ໃນເດືອນທັນວາ 2008, ລັດຖະບານ ໄດ້ພິຈາລະນາລົງນາມໃນສົນທິສັນຍາຕ້ານລະເບີດລູກຫວ່ານ ເປັນປະເທດທີສອງ ຮອງຈາກປະເທດເຈົ້າພາບນໍອກແວ ແລະ ໃຫ້ສັດຕະຍາບັນແກ່ສົນທິສັນຍາດັ່ງກ່າວໃນເດືອນມີນາ 2009. ຫຼັງຈາກນັ້ນ, ກອງປະຊຸມລັດພາຄີຄັ້ງທໍາອິດຂອງສົນທິສັນຍາຕ້ານລະເບີດລູກຫວ່ານ ກໍ່ໄດ້ຈັດຂຶ້ນຢູ່ທີ່ນະຄອນຫຼວງວຽງຈັນ ໃນເດືອນພະຈິກ 2010 ໂດຍການເປັນເຈົ້າພາບຂອງ ສປປ ລາວ.

ສົນທິສັນຍາວ່າດ້ວຍການຕ້ານລະເບີດລູກຫວ່ານ ແມ່ນເອກະສານສໍາຄັນໃນການສະໜອງທິດທາງໃນການແກ້ໄຂບັນຫາ ລບຕ. ສົນທິສັນຍາສະບັບນີ້ ສະໜອງກອບໄລຍະເວລາໃນການກວດກູ້ ແລະ ທໍາລາຍລະເບີດລູກຫວ່ານ ທີ່ຍັງຕົກຄ້າງ, ຮຽກຮ້ອງໃຫ້ມີການສະໜອງການຊ່ວຍເຫຼືອໃຫ້ແກ່ຜູ້ຖືກເຄາະຮ້າຍ ແລະ ເປັນພື້ນຖານໃນ

ການຮ່ວມມືສາກົນ ແລະ ການຊ່ວຍເຫຼືອ ເພື່ອປະຕິບັດພັນທະຕ່າງໆທີ່ລະບຸໄວ້ໃນສົນທິສັນຍາຕ້ານລະເບີດລູກຫວ່ານ. ລັດຖະບານລາວ ເປັນປະເທດນຳໜ້າໃນການໂຄສະນາລະດົມຂົນຂວາຍການຈັດຕັ້ງປະຕິບັດສົນທິສັນຍາຕ້ານລະເບີດລູກຫວ່ານ ໃນບັນດາປະເທດໃນໂລກ.

ໃນເດືອນມັງກອນ 2008 ລັດຖະບານ ໄດ້ລົງນາມໃນສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ. ສົນທິສັນຍາດັ່ງກ່າວ ແມ່ນສະໜອງກອບແຜນວຽກໂດຍລວມເພື່ອສະໜັບສະໜູນຄວາມຕ້ອງການຂອງຄົນພິການ ແລະ ໂຄສະນາສິດທິຂອງເຂົາເຈົ້າ, ຊຶ່ງລວມທັງຄວາມຕ້ອງການ ແລະ ສິດທິຂອງຜູ້ທີ່ຖືກເຄາະຮ້າຍຈາກ ລບຕ ແລະ ເປັນການສະໜັບສະໜູນການປະຕິບັດພັນທະສາກົນ ພາຍໃຕ້ມາດຕາທີ 5 ຂອງສົນທິສັນຍາຕ້ານລະເບີດລູກຫວ່ານ.

ໃນເດືອນມິຖຸນາ 2012 ລັດຖະບານ ໄດ້ຮັບຮອງແຜນຍຸດທະສາດແຫ່ງຊາດ ແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ສະບັບທົບທວນຄືນ ທີ່ໃສ່ຊື່ວ່າ “ເສັ້ນທາງກ້າວສູ່ຄວາມປອດໄພ II” ເພື່ອເປັນທິດທາງໃນການແກ້ໄຂບັນຫາ ລບຕ ຮອດປີ 2020. ແຜນຍຸດທະສາດສະບັບນີ້ ສ້າງຂຶ້ນ ເພື່ອເຊື່ອມໂຍງແຜນແກ້ໄຂບັນຫາ ລບຕ ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VII ແນໃສ່ໃຫ້ວຽກງານແກ້ໄຂບັນຫາ ລບຕ ມີບົດບາດສະໜັບສະໜູນການພັດທະນາຫຼາຍຂຶ້ນກວ່າເກົ່າ.

**II. ຕີລາຄາຜົນສຳເລັດການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ ແກ້ໄຂບັນຫາ ລບຕ ໃນໄລຍະ 2011-2015.**

**1. ຢືນຢັນຄາດໝາຍແຜນຍຸດທະສາດແຫ່ງຊາດ ແກ້ໄຂບັນຫາ ລບຕ ສຳລັບປີ 2011-2020.**

1.1. ຫຼຸດຜ່ອນຈຳນວນຜູ້ຖືກເຄາະຮ້າຍຈາກ ລບຕ ຈາກ 300 ຄົນ ລົງຕ່ຳກ່ວາ 75 ຄົນຕໍ່ປີ.

1.2. ຮັບປະກັນການປິ່ນປົວທາງການແພດ ແລະ ການຟື້ນຟູສຸຂະພາບຂອງຜູ້ລອດຊີວິດຈາກອຸບັດເຫດຈາກ ລບຕ ຢ່າງສອດຄ່ອງກັບສົນທິສັນຍາສາກົນ.

1.3. ປົດປ່ອຍເນື້ອທີ່ດິນ ທີ່ເປັນບູລິມະສິດ ແລະ ເກັບກູ້ ລບຕ ຕາມມາດຕະຖານແຫ່ງຊາດ ແລະ ພັນທະສົນທິສັນຍາສາກົນ.

1.4. ຮັບປະກັນປະສິດທິພາບການນຳພາ, ການປະສານງານ ແລະ ການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ ແກ້ໄຂບັນຫາ ລບຕ.

1.5. ສ້າງຂີດຄວາມອາດສາມາດແຫ່ງຊາດທີ່ຍືນຍົງ ໂດຍໃຫ້ເປັນໜ້າທີ່ປົກກະຕິຂອງສະຖາບັນການຈັດຕັ້ງຂອງລັດຖະບານ.

1.6. ຮັບປະກັນການປະຕິບັດພັນທະໃນສົນທິສັນຍາສາກົນ.

**2. ຜົນສຳເລັດ.**

**2.1. ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ.**

- ໄດ້ສຳເລັດການຄົ້ນຄ້ວາສ້າງຮ່າງຄຳສັ່ງນາຍົກ ວ່າດ້ວຍການເພີ່ມທະວີການໂຄສະນາທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ.

- ໄດ້ສຳເລັດການປະເມີນຜົນ ກ່ຽວກັບການຮັບຮູ້, ພຶດຕິກຳ ແລະ ທັດສະນະຄະຕິຂອງກຸ່ມສ່ຽງຕໍ່ການເກີດອຸບັດເຫດຈາກ ລບຕ.

- ໄດ້ສົມທົບກັບກະຊວງສຶກສາທິການ ແລະ ກິລາ ປັບປຸງ ແລະ ຈັດພິມປຶ້ມຫຼັກສູດວິຊາ ລບຕ ຈຳນວນ 4,515 ຊຸດ ໂດຍການຊ່ວຍເຫຼືອຂອງອົງການຢູນິເຊບ 1,000 ຊຸດ, ອົງການແມັກ 400 ຊຸດ, ອົງການເຫັດໄອ 1,000 ຊຸດ, ອົງການກອຍກາ 2,115 ຊຸດ; ນຳໄປສອນຢູ່ໃນໂຮງຮຽນຊັ້ນປະຖົມເປົ້າໝາຍຢູ່ 9 ແຂວງ, 42 ເມືອງ, 710 ໂຮງຮຽນຊັ້ນປະຖົມ ມີນັກຮຽນທີ່ໄດ້ຮຽນກ່ຽວກັບວິຊາ ລບຕ ຈຳນວນ 217,862 ຄົນ; ໄດ້ຝຶກຄູສອນຢູ່ໃນວິທະຍາໄລຄູ 8 ແຫ່ງ ມີຄູທີ່ໄດ້ຮຽນວິທີສອນວິຊາ ລບຕ ຈຳນວນ 8,184 ຄົນ.

- ໄດ້ປະສານກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ດຳເນີນລາຍການວິທະຍຸຊຸມຊົນກ່ຽວກັບທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ ຢູ່ແຂວງຄຳມ່ວນ, ສາລະວັນ, ເຊກອງ ແລະ ຈຳປາສັກ, ຊຶ່ງມີປະຊາຊົນສາມາດເຂົ້າເຖິງລາຍການວິທະຍຸດັ່ງກ່າວໄດ້ 100 ສ່ວນຮ້ອຍ ແລະ ຍັງສາມາດກວມແຂວງໃກ້ຄຽງອີກຕື່ມ. ນອກຈາກນັ້ນ, ຍັງໄດ້ເປີດສະປອດໂຄສະນາກ່ຽວກັບ ລບຕ ທີ່ໄດ້ເກີດອຸບັດເຫດຂຶ້ນໃນແຕ່ລະຄັ້ງຢູ່ບັນດາແຂວງດັ່ງກ່າວ.

- ໄດ້ດຳເນີນການປະເມີນຄວາມສາມາດອາສາສະໝັກບ້ານຂອງ ຄກລ ຢູ່ແຂວງຫົວພັນ, ຊຽງຂວາງ, ຄຳມ່ວນ ແລະ ສະຫວັນນະເຂດ.

- ໄດ້ປະສານກັບ ຄກລ, ອົງການເອັດສ໌ໂອເອັດສ໌, ອົງການແມັກ, ອົງການເຫັດໂອ, ອົງການເວີອີດູເຂັ້ນ, ອົງການດີຊີເອ, ອົງການຊີອາເອັດສ໌, ອົງການແຄນາໆຊາດ ແລະ ບັນດາບໍລິສັດເກັບກູ້ ລບຕ ດຳເນີນການໂຄສະນາທີ່ມາ ແລະ ຄວາມອັນຕະລາຍຈາກ ລບຕ ຢູ່ໂຮງຮຽນ ແລະ ຊຸມຊົນທີ່ມີຜົນກະທົບຢູ່ 12,000 ກວ່າແຫ່ງ, ຊຶ່ງມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 1,6 ລ້ານກວ່າຄົນ ໃນນັ້ນ ມີເດັກນ້ອຍ 1,2 ລ້ານກວ່າຄົນ ແລະ ຜູ້ໃຫຍ່ 4 ແສນກວ່າຄົນ.

ຜ່ານຈາກການດຳເນີນການໂຄສະນາທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ ຂອງທັງພາກລັດ ແລະ ເອກະຊົນດັ່ງກ່າວຂ້າງເທິງ ໄດ້ເຮັດໃຫ້ຜູ້ຖືກເຄາະຮ້າຍຈາກ ລບຕ* ຫຼຸດລົງຈາກ 300 ຄົນ ໃນເມື່ອກ່ອນ ລົງເປັນ 50 ຄົນໂດຍສະເລ່ຍ.

*ກຼາບສະແດງຈຳນວນອຸບັດເຫດ (ຄັ້ງ) ແລະ ຜູ້ຖືກເຄາະຮ້າຍຈາກ ລບຕ (ຄົນ) ແຕ່ປີ 2011-2015




**2.2. ວຽກງານຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ.**

- ໄດ້ຮັບຮອງ ແລະ ປະກາດໃຊ້ແຜນຍຸດທະສາດຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ສຳລັບປີ 2014-2020.

- ໄດ້ຕິດຕາມ, ເກັບກຳຂໍ້ມູນຜູ້ຖືກເຄາະຮ້າຍຈາກ ລບຕ ໃນທົ່ວປະເທດ ທີ່ເກີດຂຶ້ນໃໝ່ແຕ່ປີ 2009 ເຖິງປະຈຸບັນ ມີ 319 ຄັ້ງ ລວມມີຜູ້ຖືກເຄາະຮ້າຍ 522 ຄົນ ໃນນັ້ນ ບາດເຈັບ 391 ຄົນ ແລະ ເສຍຊີວິດ 131 ຄົນ. ປະຈຸບັນດຽວນີ້ ມີຜູ້ລອດຊີວິດຈາກ ລບຕ ທັງໝົດປະມານ 20 ພັນກວ່າຄົນ.

- ສຳເລັດການວິເຄາະຂໍ້ມູນຄວາມຕ້ອງການຂອງຜູ້ລອດຊີວິດຈາກ ລບຕ ຢູ່ 10 ແຂວງ ຈຳນວນ 9,000 ຄົນ. ພ້ອມນັ້ນ, ຍັງໄດ້ສະໜອງຂໍ້ມູນຜູ້ຖືກເຄາະຮ້າຍຈາກ ລບຕ ໃຫ້ແກ່ພາກສ່ວນກ່ຽວຂ້ອງ ຢ່າງເປັນປົກກະຕິ.

- ໄດ້ສຳເລັດການຝຶກອົບຮົມໃຫ້ຜູ້ປະສານງານຂັ້ນທ້ອງຖິ່ນ ເພື່ອຕິດຕາມລາຍງານການເກີດອຸບັດເຫດ ແລະ ຜູ້ຖືກເຄາະຮ້າຍຈາກ ລບຕ ຢູ່ 10 ແຂວງຄື: ແຂວງຫົວພັນ, ຊຽງຂວາງ, ຫຼວງພະບາງ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື.

- ໄດ້ປະສານກັບກະຊວງສາທາລະນະສຸກ ເພື່ອຂໍການຊ່ວຍເຫຼືອຈາກ ສປ ຈີນ ໃນນີ້ ມີລົດນຳສົ່ງຄົນເຈັບ 10 ຄັນ, ຕຽງນອນຄົນເຈັບ 35 ໜ່ວຍ, ໂຕະຜ່າຕັດ 4 ຊຸດ ແລະ ເຄື່ອງມືການແພດຈຳນວນໜຶ່ງ. ເຄື່ອງດັ່ງກ່າວ ໄດ້ນຳໄປມອບໃຫ້ທ້ອງຖິ່ນຄື: ລົດນຳສົ່ງຄົນເຈັບໃຫ້ໂຮງໝໍເມືອງກ່ອນ ແຂວງຫົວພັນ 1 ຄັນ, ໂຮງໝໍເມືອງບົວລະພາ ແຂວງຄຳມ່ວນ 1 ຄັນ, ໂຮງໝໍເມືອງນອງ ແຂວງສະຫວັນນະເຂດ 1 ຄັນ, ໂຮງໝໍເມືອງໂພນໄຊ ແຂວງຫຼວງພະບາງ 1 ຄັນ, ໂຮງໝໍເມືອງສະໝ້ວຍ ແຂວງສາລະວັນ 1 ຄັນ, ໂຮງໝໍແຂວງໄຊສົມບູນ 1 ຄັນ, ກອງເກັບກູ້ລະເບີດມະນຸດສະທຳ ກະຊວງປ້ອງກັນປະເທດ 3 ຄັນ ແລະ ຄກລ 1 ຄັນ. ນອກນີ້, ຍັງໄດ້ເອົາຕຽງນອນຄົນເຈັບມອບໃຫ້ໂຮງໝໍແຂວງຄຳມ່ວນ ແລະ ສະຫວັນນະເຂດ. ສ່ວນອຸປະກອນການແພດ ແມ່ນໄດ້ນຳໄປມອບໃຫ້ບັນດາໂຮງໝໍດັ່ງກ່າວຂ້າງເທິງ.

- ໄດ້ປະສານກັບກະຊວງສາທາລະນະສຸກ ປິ່ນປົວຜູ້ລອດຊີວິດຈາກ ລບຕ ພາຍຫຼັງອຸບັດເຫດ 410 ຄົນ, ອົງການເວີຣິດູເຄຊັ້ນ, ຄິວແອວເອ ແລະ ເຫັດໄອ ໃຫ້ການສະໜັບສະໜູນ; ຟື້ນຟູສຸຂະພາບໃຫ້ຜູ້ລອດຊີວິດຈາກ ລບຕ 3,143 ຄົນ (ລວມທັງຄົນພິການທົ່ວໄປ), ສູນຟື້ນຟູໜ້າທີ່ການ ແລະ ອົງການໂຄບ ໃຫ້ການສະໜັບສະໜູນ; ປະກອບອາຊີບໃຫ້ຜູ້ຖືກເຄາະຮ້າຍຈາກ ລບຕ 1,257 ຄົນ, ອົງການເວີຣິດູເຄຊັ້ນ, ຄິວແອວເອ, ເຫັດໄອ, ອົງການກາແດງລາວ ແລະ ກາແດງສາກົນ ໃຫ້ການສະໜັບສະໜູນ; ໃຫ້ທຶນການສຶກສາແກ່ຜູ້ລອດຊີວິດ 166 ຄົນ, ອົງການເວີຣິດູເຄຊັ້ນ ແລະ ຄິວແອວເອ ໃຫ້ການສະໜັບສະໜູນ ແລະ ຝຶກອົບຮົມການປະຖົມພະຍາບານຂັ້ນຕົ້ນ 107 ບ້ານ, ອົງການເວີຣິດູເຄຊັ້ນ ແລະ ຊີອາເອັດສ໌ ໃຫ້ການສະໜັບສະໜູນ.

**2.3. ວຽກງານສຳຫຼວດ ແລະ ກວດກູ້ ລບຕ.**

- ໄດ້ປະກາດໃຊ້ລະບຽບການສຳຫຼວດ ລບຕ ຕົກຄ້າງຢູ່ ສປປ ລາວ.

- ໄດ້ປະສານກັບ ຄກລ, ອົງການແມັກ, ອົງການເອັນພີເອ, ອົງການເຮໂລທຼາດ ແລະ ອົງການເຫັດໄອ ດຳເນີນການສຳຫຼວດບໍ່ແມ່ນວິຊາການ ແລະ ວິຊາການ ຢູ່ແຂວງຫົວພັນ, ຊຽງຂວາງ, ຫຼວງພະບາງ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື ສາມາດຢັ້ງຢືນພື້ນທີ່ ລບຕ ຕົກຄ້າງໄດ້ທັງໝົດ 3,783 ພື້ນທີ່, ກວມເອົາ 15,219 ເຮັກຕາ.

- ຄຊກລ ໄດ້ຮ່ວມກັບບໍລິສັດໂກມາຊຸຂອງຍີ່ປຸ່ນ ທົດລອງລົດໜັກທຳລາຍລະເບີດລູກຫວ່ານ 2 ຄັ້ງ; ຄກລ ທົດລອງລົດໜັກຕັດຫຍ້າ, ຕັດບົ່ມໃຫ່ຍດ້ອຍເລື່ອຍ ແລະ ຮ່ວມກັບບໍລິສັດເອັມເອັມຈີ ທົດລອງເຄື່ອງກວດລະເບີດ; ອົງການເອັນພີເອ ທົດລອງນຳໃຊ້ໝາດົມກິ່ນລະເບີດ.

- ໄດ້ປະສານກັບຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ) ສ້າງແຜນສຳຫຼວດ ແລະ ກວດກູ້ ລບຕ ຮັບໃຊ້ຈຸດສຸມພັດທະນາຕ່າງໆຂອງສູນກາງ ແລະ ທ້ອງຖິ່ນ ລວມທັງໝົດ 64 ຈຸດສຸມ ແລະ 167 ໂຄງການຈັດສັນພູມລຳເນົາຄົງທີ່.

- ໄດ້ປະສານກັບອົງການປະຕິບັດງານ ດຳເນີນການກວດກູ້ ລບຕ ໄດ້ 29,701 ເຮັກຕາ ໃນນີ້ ດິນກະສິກຳ 18,541 ເຮັກຕາ ແລະ ດິນພັດທະນາ 11,160 ເຮັກຕາ; ໄດ້ທຳລາຍ ລບຕ ທັງໝົດໄດ້ 552,968 ໜ່ວຍ ໃນນີ້ ບົ່ມໃຫ່ຍ 1,489 ໜ່ວຍ, ລະເບີດລູກຫວ່ານ 259,421 ໜ່ວຍ, ມີນ 837 ໜ່ວຍ ແລະ ສຳພາວຸດອື່ນໆ 291,221 ຫົວໜ່ວຍ. ຜົນງານລະອຽດສະແດງຢູ່ຕາຕະລາງຂ້າງລຸ່ມນີ້:

*ຕົວເລກຜົນສຳເລັດຂອງການກວດກູ້ ແລະ ທຳລາຍ ລບຕ ຂອງບັນດາອົງການປະຕິບັດງານ ແຕ່ປີ 2011-2015

| ລຳດັບ | ຊື່ອົງການ | ເນື້ອທີ່ ກະສິກຳ (ເຮັກຕາ) | ເນື້ອທີ່ພັດ ທະນາ (ເຮັກຕາ) | ລວມ | ບົມໃຫຍ່ | ລະເບີດ ລູກຫວ່ານ | ລະເບີດ ຝັງດິນ | ສຳພາ ວຸດອື່ນໆ | ລວມ |
|---|---|---|---|---|---|---|---|---|---|
| 1 | ຄກລ | 12,186 | 2,320 | 14,506 | 976 | 149,171 | 714 | 243,317 | **394,178** |
| 2 | ເອັນພີເອ | 317 | 124 | 441 | 55 | 35,586 | 0 | 5,860 | **41,501** |
| 3 | ແມັກ | 2,752 | 267 | 3,019 | 80 | 41,752 | 88 | 14,699 | **56,619** |
| 4 | ເຫັດໄອ | 127 | 65 | 192 | 134 | 6,371 | 10 | 7,654 | **14,169** |
| 5 | ເຣໂລຫຼາດ | 227 | 29 | 256 | 95 | 12,626 | 0 | 5,677 | **18,398** |
| 6 | ໂຊດີ | 396 | 98 | 494 | 34 | 3,902 | 0 | 1,961 | **5,897** |
| 7 | ອາໂປໂປ | 12 | 0 | 12 | 0 | 1,117 | 1 | 47 | **1,165** |
| 8 | ອາສາ | 0 | 169 | 169 | 0 | 78 | 0 | 128 | **206** |
| 9 | ພີເອັດສ໌ດີ | 574 | 29 | 603 | 0 | 669 | 0 | 272 | **941** |
| 10 | ເອັດສ໌ບີເຫັດ | 1,115 | 484 | 1599 | 4 | 1,298 | 18 | 51 | **1,371** |
| 11 | ລາວບີເອັດສ໌ ແອວ | 21 | 1,388 | 1409 | 7 | 715 | 0 | 372 | **1,094** |
| 12 | ແອວເອຢູ ເອັນຊີ | 0 | 975 | 975 | 0 | 0 | 0 | 1 | **1** |
| 13 | ອອດລາວ | 0 | 661 | 661 | 0 | 2 | 0 | 2 | **4** |
| 14 | ອູມມາ | 627 | 0 | 627 | 2 | 593 | 0 | 25 | **620** |
| 15 | ແສງເພັດ | 0 | 1,458 | 1,458 | 2 | 320 | 0 | 501 | **823** |
| 16 | ເອັກທີດີ | 15 | 242 | 257 | 0 | 0 | 0 | 0 | **0** |
| 17 | ທີເຫັດບີ | 0 | 150 | 150 | 0 | 0 | 0 | 0 | **0** |
| 18 | ແບັກເຫັກ | 0 | 119 | 119 | 20 | 1,044 | 6 | 1,029 | **2,099** |
| 19 | ມິວເຊີດສ໌ | 0 | 842 | 842 | 38 | 1,762 | 0 | 4,019 | **5,819** |
| 20 | ພີຊີແອວ | 32 | 111 | 143 | 4 | 179 | 0 | 66 | **249** |
| 21 | ເອັມເອັມຈີ | 140 | 1,630 | 1,770 | 38 | 2,236 | 0 | 5,540 | **7,814** |
| **ລວມ** | | **18,541** | **11,160** | **29,701** | **1,489** | **259,421** | **837** | **291,221** | **552,968** |

**2.4. ວຽກບໍລິຫານຄຸ້ມຄອງ.**

**2.4.1. ວຽກຂໍ້ມູນຂ່າວສານ:**

- ໄດ້ພັດທະນາລະບົບການເກັບກຳ, ການຄົ້ນຄ້ວາວິໄຈຂໍ້ມູນ ລບຕ ແລະ ສາມາດສະໜອງຂໍ້ມູນ ລບຕ ໃຫ້ພາຍໃນ ແລະ ຕ່າງປະເທດ ໄດ້ດີພໍສົມຄວນ.
- ໄດ້ຕິດຕັ້ງລະບົບຕິດຕາມທາງໄກ (ລີໂມດເອກເຊດສ໌) ກ່ຽວກັບການປ້ອນຂໍ້ມູນ ແລະ ແກ້ໄຂບັນຫາຖານຂໍ້ມູນ ລບຕ ແຫ່ງຊາດ ໃຫ້ບັນດາອົງການປະຕິບັດງານ.
- ໄດ້ຝຶກອົບຮົມການນຳໃຊ້ລະບົບອິມສະມາ (ຖານຂໍ້ມູນ ລບຕ ແຫ່ງຊາດ) ໃຫ້ບັນດາອົງການປະຕິບັດງານ ແລະ ບໍລິສັດເກັບກູ້ ລບຕ ລວມທັງໝົດ (22 ພາກສ່ວນ) ໃນທົ່ວປະເທດ.
- ໄດ້ຕິດຕາມຊ່ວຍເຫຼືອບັນດາອົງການປະຕິບັດງານກ່ຽວກັບການປ້ອນຂໍ້ມູນ ລບຕ ເຂົ້າໃນລະບົບຖານຂໍ້ມູນ ລບຕ ແຫ່ງຊາດ ລວມທັງໝົດ 23 ຄັ້ງ. ປະຈຸບັນດຽວນີ້ ມີ 17 ໃນ 22 ອົງການປະຕິບັດງານ ສາມາດສົ່ງຂໍ້ມູນການປະຕິບັດງານຂອງຕົນເຂົ້າຖານຂໍ້ມູນ ລບຕ ແຫ່ງຊາດ ຢ່າງເປັນປົກກະຕິ.

- ໄດ້ສົມທົບກັບສູນຈີໄອຊີເຫັດດີຂອງສະວິດເຊີແລນ ຍົກລະດັບລະບົບຖານຂໍ້ມູນ ລບຕ ແຫ່ງຊາດ ໃຫ້ທັນສະໄໝກວ່າເກົ່າ (ອີມສະມາ ເວີເຊີ້ນ 6).

**2.4.2. ວຽກຄຸ້ມຄອງກວດກາຄຸນນະພາບ ແລະ ຝຶກອົບຮົມ:**

- ໄດ້ປັບປຸງມາດຕະຖານແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ບົດທີ 2 ກ່ຽວກັບການອອກໃບຢັ້ງຢືນໃຫ້ບັນດາອົງການປະຕິບັດງານ ໃຫ້ສອດຄ່ອງຕາມຄວາມເປັນຈິງໃນປະຈຸບັນ.
- ໄດ້ປັບປຸງຫຼັກສູດການຮຽນ-ການສອນ ກ່ຽວກັບການເກັບກູ້ ແລະ ທຳລາຍ ລບຕ.
- ໄດ້ອອກໜັງສືຢັ້ງຢືນໃໝ່ໃຫ້ອົງການປະຕິບັດງານ 7 ສະບັບ ແລະ ໄດ້ຕໍ່ໜັງສືຢັ້ງຢືນ 14 ສະບັບ.
- ໄດ້ລົງຕິດຕາມການປະຕິບັດໜ້າທີ່ຂອງອົງການປະຕິບັດງານ 59 ຄັ້ງ.
- ໄດ້ຝຶກອົບຮົມວິຊາກວດກູ້ ແລະ ທຳລາຍ ລບຕ 243 ຄົນ ໃນນັ້ນ ວິຊາການຂັ້ນ 1 ມີ 107 ຄົນ, ຂັ້ນ 2 ມີ 16 ຄົນ, ຂັ້ນ 3 ມີ 27 ຄົນ ແລະ ຂັ້ນ 4 ມີ 27 ຄົນ.
- ໄດ້ພັດທະນາກຳລັງເກັບກູ້ມະນຸດສະທຳຂອງກອງທັບ ໂດຍຝຶກຢູ່ພາຍໃນປະເທດ 3 ທີມ ແລະ ສົ່ງໄປຍົກລະດັບຢູ່ ສປ ຈີນ ແລະ ລາດຊະອານາຈັກໄທ ລວມທັງໝົດ 37 ຄົນ.

**2.4.3. ວຽກແຜນການ ແລະ ປະຊາສຳພັນ:**

- ໄດ້ປະສານກັບສື່ມວນຊົນ ລົງເກັບກຳຂ່າວກ່ຽວກັບທີ່ມາ ແລະ ຜົນຮ້າຍຂອງ ລບຕ ຢູ່ບັນດາແຂວງທີ່ມີ ລບຕ ຕົກຄ້າງ ຈຳນວນ 5 ຄັ້ງ.
- ໄດ້ນຳພາບັນດາປະເທດຜູ້ໃຫ້ທຶນ ລົງຢ້ຽມຢາມສະໜາມກວດກູ້ ລບຕ ເນື່ອງໃນໂອກາດທີ່ມາຮ່ວມກອງປະຊຸມໂຕະມົນປະຈຳປີຢູ່ ສປປ ລາວ.
- ໄດ້ປັບປຸງສື່ໂຄສະນາຕ່າງໆເຊັ່ນ: ເວບໄຊ້, ໃບປິວ, ແຜ່ນພັບ, ປື້ມບົດລາຍງານ ແລະ ອື່ນໆ. ພ້ອມທັງມີການວາງສະແດງຜົນງານການເຄື່ອນໄຫວວຽກງານ ລບຕ ຢູ່ໃນກອງປະຊຸມຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.
- ຈັດພິທີສະເຫຼີມສະຫຼອງວັນຕ້ານລະເບີດຝັງດິນສາກົນ ແລະ ວັນມີຜົນບັງຄັບໃຊ້ສົນທິສັນຍາລະເບີດລູກຫວ່ານທຸກໆປີ.
- ໄດ້ສ້າງແຜນການແຕ່ລະໄລຍະ, ຊຸກຍູ້ຕິດຕາມ ແລະ ລາຍງານໃຫ້ແກ່ລັດຖະບານ ແລະ ປະເທດຜູ້ໃຫ້ທຶນຢ່າງເປັນປົກກະຕິ.
- ໄດ້ຈັດກອງປະຊຸມຕ່າງໆເຊັ່ນ: ກອງປະຊຸມຄະນະຊີ້ນຳໂຄງການສ້າງຄວາມເຂັ້ມແຂງໃຫ້ຫ້ອງການ ຄຊກລ ແລະ ຄກລ; ກອງປະຊຸມຄະນະຊີ້ນຳກອງທຶນຊ່ວຍເຫຼືອລ້າ ສຳລັບວຽກງານແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ; ກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ; ກອງປະຊຸມເວທີປຶກສາຫາລືວຽກງານແກ້ໄຂບັນຫາ ລບຕ 16 ຄັ້ງ; ເຂົ້າຮ່ວມກອງປະຊຸມປະຈຳປີຫົວໜ້າອົງການແກ້ໄຂບັນຫາ ລບຕ ຢູ່ເຈນນີວາ, ເຂົ້າຮ່ວມກອງປະຈຳປີສົນທິສັນຍາຕ້ານລະເບີດລູກຫວ່ານ ແລະ ເຂົ້າຮ່ວມກອງປະຊຸມປະຈຳປີສົນທິສັນຍາລະເບີດທົ່ວໄປ 11 ຄັ້ງ.

**2.4.4. ວຽກງານຮ່ວມມື ແລະ ລະດົມທຶນ:**

- ໄດ້ສັງລວມຂໍ້ມູນກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ສົ່ງໃຫ້ກະຊວງການຕ່າງປະເທດ ເພື່ອສ້າງເປັນບົດລາຍງານປະຈຳປີສົນທິສັນຍາວ່າຕ້ານລະເບີດລູກຫວ່ານ ແລະ ສົນທິສັນຍາຕ້ານລະເບີດຝັງດິນຂອງ ສປປ ລາວ ໃຫ້ແກ່ເລຂາທິການໃຫ່ຍຂອງອົງການ ສປຊ.
- ໄດ້ສົມທົບກັບອົງການ ສປຊ ຄົ້ນຄ້ວາຂຽນບົດສະເໜີໂຄງການຂໍການຊ່ວຍເຫຼືອນຳຕ່າງປະເທດເຊັ່ນ: ອິດສະຕາລີ, ໄອແລນ, ສະວິດເຊີແລນ, ລຸກຊຳບວກ, ການາດາ, ເບນຊິກ, ສະຫະພາບເອີລົບ, ນໍອກແວ, ສ ເກົາຫຼີ ແລະ ອື່ນໆ.
- ໄດ້ສົມທົບກັບບໍລິສັດອາມໍກຼູບ (ສະເຕີລິ້ງ ໃນປະຈຸບັນ) ຄົ້ນຄ້ວາຂຽນບົດສະເໜີໂຄງການຂໍການຊ່ວຍເຫຼືອນຳສະຫະລັດອາເມລິກາ.

- ໄດ້ຄົ້ນຄ້ວາ ແລະ ເຊັນບົດບັນທຶກຄວາມເຂົ້າໃຈກັບບັນດາອົງການຈັດຕັ້ງສາກົນ ລວມທັງໝົດ 33 ສະບັບ.

- ໄດ້ຮັບທຶນຊ່ວຍເຫຼືອເຂົ້າໃນຂະແໜງການແກ້ໄຂບັນຫາ ລບຕ ທັງໝົດ 175 ລ້ານໂດລາ ສຫລ. ເງິນຈຳນວນດັ່ງກ່າວຜ່ານ:

+ ຜ່ານອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ ຈຳນວນ 30 ລ້ານໂດລາ ສຫລ.

+ ຜ່ານການຮ່ວມມືສອງຝ່າຍ ຈຳນວນ 14,5 ລ້ານໂດລາ ສຫລ.

+ ຜ່ານອົງການປະຕິບັດງານມະນຸດສະທຳຂອງຕ່າງປະເທດ ຈຳນວນ 64 ລ້ານໂດລາ ສຫລ.

+ ຜ່ານບໍລິສັດກວດກູ້ລະເບີດຂອງລາວ ແລະ ຕ່າງປະເທດ (ສ້າງທາງ, ສ້າງເຂື່ອນ, ຂະຫຍາຍຕາຄ່າຍໄຟຟ້າ, ປູກປ່າ, ປູກກາເຟ ແລະ ອື່ນໆ) ລວມທັງໝົດ 60 ລ້ານໂດລາ ສຫລ.

+ ທຶນສົມທົບຂອງລັດຖະບານລາວ ຈຳນວນ 6,5 ລ້ານໂດລາ ສຫລ ໃນນີ້ ມີງົບປະມານເປັນຄ່າເຊົ່າຫ້ອງການ ຄຊກລ ແລະ ຄກລ, ຄ່າຍົກເວັ້ນພາສີນຳເຂົ້າພາຫະນະ, ອຸປະກອນຮັບໃຊ້ຕ່າງໆ, ຍົກເວັ້ນຄ່າທຳນຽມນຳໃຊ້ຄື້ນວິທະຍຸ-ໂຟນີ້, ຄ່າຝຶກອົບຮົມໃຫ້ກອງກວດກູ້ລະເບີດມະນຸດສະທຳກອງທັບ ແລະ ຄ່າສ້າງຫ້ອງການປະສານງານ ຄກລ ຢູ່ແຂວງອັດຕະປື.

**2.4.5. ວຽກການຈັດຕັ້ງ ແລະ ການປະສານງານ:**

- ໄດ້ປັບປຸງດຳລັດ 406/ນຍ, ວັນທີ 8 ພະຈິກ 2011 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການ ຄຊກລ ມາເປັນດຳລັດ ເລກທີ 043/ລບ, ວັນທີ 3 ກຸມພາ 2015 ໂດຍໄດ້ເພີ່ມຮອງປະທານ ຄຊກລ ຕື່ມອີກ 2 ທ່ານ ແລະ ເພີ່ມບັນດາທ່ານຕາງໜ້າກະຊວງ ແລະ ອົງການຈຳນວນໜຶ່ງ ມາເປັນກຳມະການ.

- ໄດ້ປັບປຸງຄະນະກຳມະການຄຸ້ມຄອງວຽກງານແກ້ໄຂບັນຫາ ລບຕ ຂັ້ນແຂວງ (ຄກລຂ) ແລະ ຂັ້ນເມືອງ (ຄກລມ) ຢູ່ 13 ແຂວງ ຄື: ຜົ້ງສາລີ, ຫົວພັນ, ຊຽງຂວາງ, ຫຼວງພະບາງ, ວຽງຈັນ, ໄຊສົມບູນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື. ນອກຈາກນີ້, ຍັງໄດ້ປັບປຸງຫ້ອງການຊ່ວຍວຽກ ຄກລຂ ຢູ່ບັນດາແຂວງດັ່ງກ່າວ.

- ຂະແໜງການແກ້ໄຂບັນຫາ ລບຕ ມີ 19 ອົງການ ໃນນັ້ນ ອົງການກວດກູ້ລະເບີດເພື່ອມະນຸດສະທຳມີ 7 ອົງການ (ໂຈະ 1 ອົງການ, ຍັງ 6 ອົງການ) ແລະ ບໍລິສັດກວດກູ້ລະເບີດ ມີ 15 ບໍລິສັດ (ໂຈະ 3 ບໍລິສັດ, ເພີ່ມຕື່ມ 1 ບໍລິສັດ, ຍັງ 13 ບໍລິສັດ).

- ລາຍລະອຽດກຳລັງຂອງແຕ່ລະອົງການມີດັ່ງນີ້:

| ລຳດັບ | ຊື່ອົງການ | ຈຳນວນທີມສຳຫຼວດບໍ່ແມ່ນວິຊາການ | ຈຳນວນທີມສຳຫຼວດວິຊາການ | ຈຳນວນທີມກວດກູ້ | ລວມ |
|---|---|---|---|---|---|
| 1 | ຄກລ | 9 | 9 | 55 | **73** |
| 2 | ກອງກວດກູ້ລະເບີດມະນຸດສະທຳກອງທັບ | 0 | 0 | 3 | **3** |
| 3 | ແມັກ | 15 | 5 | 28 | **48** |
| 4 | ເອັນພີເອ | 9 | 18 | 0 | **27** |
| 5 | ເຫັດໄອ | 1 | 1 | 3 | **5** |
| 6 | ເຣໂລຫຼາດ | 12 | 12 | 10 | **34** |
| **ລວມ:** | | **46** | **45** | **99** | **190** |

- ທີ່ວຂະແໜງການແກ້ໄຂບັນຫາ ລບຕ ມີພະນັກງານ-ກຳມະກອນທັງໝົດ 3,226 ຄົນ ໃນນີ້ ຄົນລາວ 3,161 ຄົນ ແລະ ຊ່ຽວຊານຕ່າງປະເທດ 65 ຄົນ.

| ຊື່ອົງການ | ພະນັກງານບໍລິຫານ | | | | ພະນັກງານພາກສະໜາມ | | | | ລວມ |
|---|---|---|---|---|---|---|---|---|---|
| | ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | | |
| | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | |
| ຄຊກລ | 21 | 15 | 2 | 0 | 5 | 2 | 2 | 0 | **47** |
| ຄກລ | 136 | 53 | 4 | 1 | 814 | 193 | 0 | 0 | **1,201** |
| ເອັນພີເອ | 30 | 15 | 4 | 1 | 205 | 62 | 3 | 1 | **321** |
| ແມັກ | 57 | 25 | 2 | 1 | 246 | 77 | 3 | 1 | **412** |
| ເຫັດໄອ | 15 | 11 | 2 | 1 | 90 | 40 | 1 | 2 | **162** |
| ເຣໂລຫຼາດ | 23 | 10 | 1 | 1 | 122 | 46 | 2 | 0 | **205** |
| ເຈມັດ | 1 | 2 | 0 | 1 | 4 | 0 | 3 | 0 | **11** |
| ອາສາ | 2 | 1 | 0 | 0 | 19 | 0 | 0 | 0 | **22** |
| ພີເອັດສ໌ດີ | 5 | 4 | 0 | 0 | 48 | 14 | 0 | 0 | **71** |
| ເອັດສ໌ບີເຫັດ | 2 | 1 | 0 | 0 | 24 | 4 | 0 | 0 | **31** |
| ລາວບີເອັດສ໌ແອວ | 3 | 0 | 0 | 0 | 30 | 2 | 0 | 0 | **35** |
| ແອວເອຢູເອັນຊີ | 4 | 1 | 0 | 0 | 55 | 0 | 2 | 0 | **62** |
| ແບັກເທັກ | 1 | 2 | 1 | 1 | 71 | 0 | 1 | 0 | **77** |
| ມິວເຊີດສ໌ | 3 | 6 | 2 | 1 | 128 | 73 | 3 | 0 | **216** |
| ເອັມເອັມຈີ | 6 | 10 | 2 | 0 | 177 | 96 | 2 | 0 | **293** |
| ເວີອິດູເຄເຊີ້ນ | 3 | 5 | 0 | 1 | 3 | 3 | 1 | 1 | **17** |
| ຊີອາເອັດສ໌ | 4 | 3 | 1 | 1 | 2 | 0 | 1 | 0 | **12** |
| ຄິວແອວເອ | 3 | 2 | 0 | 0 | 4 | 2 | 0 | 2 | **13** |
| ໂຄບ | 6 | 5 | 1 | 2 | 0 | 0 | 0 | 0 | **14** |
| ເອັດສ໌ໂອເອັດສ໌ | 1 | 0 | 0 | 0 | 3 | 0 | 0 | 0 | **4** |
| **ລວມ** | **326** | **171** | **22** | **12** | **2,050** | **614** | **24** | **7** | **3,226** |

- ພະນັກງານບໍລິຫານຄຸ້ມຄອງຂະແໜງການແກ້ໄຂບັນຫາ ລບຕ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາເພື່ອຮຽນຮູ້ເລື່ອງການຄຸ້ມຄອງກວດກາຄຸນນະພາບ; ການເຮັດສັນຍາກ່ຽວກັບການກວດກູ້ ລບຕ; ຄວາມຮັບຜິດຊອບຮ່ວມກັນທາງກົດໝາຍໃນການກວດກູ້ ລບຕ; ການເຊື່ອມສານບົດບາດຍິງ-ຊາຍເຂົ້າໃນວຽກງານແກ້ໄຂບັນຫາ ລບຕ, ລະບົບນຳໃຊ້ຖານຂໍ້ມູນ ລບຕ ແຫ່ງຊາດ ແລະ ອື່ນໆ.

ສັງລວມແລ້ວໃນໄລຍະ 5 ປີຜ່ານມາ ວຽກງານແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ໄດ້ມີການຂະຫຍາຍຕົວໄປຕາມແນວທາງນະໂຍບາຍຂອງພັກ ແລະ ທິດທາງແຜນການຂອງລັດຖະບານ. ການຈັດຕັ້ງວຽກງານແກ້ໄຂບັນຫາ ລບຕ ທັງສູນກາງ ແລະ ທ້ອງຖິ່ນ ມີຄວາມຈະແຈ້ງ ສາມາດເປັນເສນາທິການ, ປະສານງານ, ຕິດຕາມ, ກວດກາ, ຊຸກຍູ້, ສັງລວມລາຍງານວຽກງານແກ້ໄຂບັນຫາ ລບຕ ໄດ້ເປັນຢ່າງດີ. ພະນັກງານ-ກຳມະກອນລາວ ໄດ້ຮັບການສຶກສາອົບຮົມການເມືອງແນວຄິດ, ມີຄວາມສະຫງົບ ໝັ້ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ແລະ ເອົາໃຈໃສ່ເຮັດຫຼ້ອນໜ້າທີ່ ທີ່ໄດ້ຮັບມອບໝາຍ. ທຶນເຂົ້າໃນວຽກງານແກ້ໄຂບັນຫາ ລບຕ ສະເລ່ຍແລ້ວໄດ້ປີລະ 30 ລ້ານໂດ

ລາ ສຫລ, ທຽບໃສ່ປີ 2005-2010 ແມ່ນເພີ່ມຂຶ້ນ 4 ເທົ່າຕົວ. ອັນພົ້ນເດັ່ນ, ແມ່ນໄດ້ຫັນການກວດກູ້ ລບຕ ຮັບໃຊ້ຈຸດສຸມພັດທະນາ ແລະ ໂຄງການພັດທະນາຂອງສູນກາງ ແລະ ທ້ອງຖິ່ນ ໄດ້ຫຼາຍກວ່າເກົ່າ.

ຜົນສຳເລັດທີ່ກ່າວມານັ້ນ ໄດ້ມາຍ້ອນມີກົນການເມືອງສູນກາງພັກ ແລະ ລັດຖະບານຊີ້ນຳຢ່າງໃກ້ຊິດ, ຍ້ອນອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ ໃຫ້ຄວາມຮ່ວມມືໃນການປະຕິບັດຕົວຈິງ, ຍ້ອນອົງການປະຕິບັດງານຂອງລາວ ແລະ ຕ່າງປະເທດ ຕະຫຼອດຮອດ ພະນັກງານ-ກຳມະກອນ ແລະ ຊ່ຽວຊານຕ່າງປະເທດ ເອົາໃຈໃສ່ປະຕິບັດໜ້າທີ່ ແລະ ຍ້ອນການສະໜັບສະໜູນຈາກສາກົນ.

**3. ຂໍ້ຄົງຄ້າງ ແລະ ສາເຫດ.**

**3.1. ຂໍ້ຄົງຄ້າງ:**

ເຖິງແມ່ນວ່າຍາດໄດ້ໄຊຊະນະດັ່ງກ່າວຂ້າງເທິງກໍ່ຕາມ ແຕ່ເຫັນວ່າການແກ້ໄຂບັນຫາ ລບຕ ຍັງບໍ່ທັນບັນລຸຄາດໝາຍຂອງແຜນຍຸດທະສາດ ແລະ ຄາດໝາຍສະຫະສະວັດເພື່ອການພັດທະນາທີ່ວາງໄວ້ ສະແດງອອກຄື:

- ເຖິງວ່າ ຈຳນວນອຸບັດເຫດຈາກ ລບຕ ໄດ້ບັນລຸຄາດໝາຍທີ່ວາງໄວ້ ແຕ່ກໍ່ຍັງມີຜູ້ເສັຍຊີວິດ ແລະ ຖືກບາດເຈັບຍ້ອນ ລບຕ ສະເລ່ຍແລ້ວ 50 ຄົນຕໍ່ປີ, ຖືວ່າຍັງຢູ່ໃນລະດັບທີ່ໜ້າເປັນຫ່ວງ.
- ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ທາງດ້ານການປິ່ນປົວ, ຟື້ນຟູສຸຂະພາບ ປະຕິບັດບໍ່ທັນທົ່ວເຖິງ, ການປະກອບອາຊີບໃຫ້ຜູ້ຖືກເຄາະຮ້າຍຈາກ ລບຕ ກໍ່ປະຕິບັດໄດ້ໜ້ອຍ ຖ້າທຽບໃສ່ຈຳນວນຜູ້ຖືກເຄາະຮ້າຍທັງໝົດ.
- ການກວດກູ້ ລບຕ ຮັບໃຊ້ເນື້ອທີ່ຈຸດສຸມພັດທະນາ ແລະ ໂຄງການພັດທະນາຕ່າງໆ ໄດ້ພຽງແຕ່ 30 ສ່ວນຮ້ອຍຂອງແຜນການ, ບໍ່ເຖິງ 1 ສ່ວນຮ້ອຍຂອງຄວາມຕ້ອງການກວດກູ້ທັງໝົດ. ການທຳລາຍ ລບຕ ຊະນິດຕ່າງໆ ກໍ່ທຳລາຍໄດ້ ບໍ່ເຖິງ 2 ສ່ວນຮ້ອຍຂອງຈຳນວນ ລບຕ ຕົກຄ້າງທັງໝົດ.

**3.2. ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ:**

**3.2.1. ສາເຫດໃນຕົວ:**

- ບໍ່ສາມາດເຮັດໃຫ້ຂໍ້ມູນ ລບຕ ຕົກຄ້າງ ທາງດ້ານຈຳນວນ ແລະ ທາງດ້ານພື້ນທີ່ຜົນກະທົບຈະແຈ້ງໄດ້; ການສະໜອງຂໍ້ມູນກ່ຽວກັບ ລບຕ ໃຫ້ພາຍໃນ ແລະ ຕ່າງປະເທດ ເຮັດບໍ່ທັນໄດ້ດີ.
- ການຜັນຂະຫຍາຍແຜນຍຸດທະສາດແກ້ໄຂບັນຫາ ລບຕ ໃຫ້ເປັນແຜນການ, ໂຄງການທີ່ມີປະສິດທິພາບ ແລະ ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ເຮັດຍັງບໍ່ທັນໄດ້ດີ.
- ການຄຸ້ມຄອງຄຸນນະພາບການກວດກູ້ ຍັງເຮັດບໍ່ທັນທົ່ວເຖິງ ແລະ ການຄ້ຳປະກັນຄຸນນະພາບການກວດກູ້ ບາງອົງການກໍ່ມີໜັງສືມອບຮັບພື້ນທີ່ກວດກູ້, ບາງອົງການກໍ່ບໍ່ມີ.
- ການຄຸ້ມຄອງທຶນຊ່ວຍເຫຼືອຂອງຕ່າງປະເທດ ຍັງອ່ອນ ສະແດງອອກ ຄື: ການມີສ່ວນຮ່ວມຂອງຝ່າຍລາວໃນການຕັດສິນໃຈຮັບ-ຈ່າຍທຶນ ມີໜ້ອຍ; ການຈ່າຍທຶນຕົວຈິງເຫັນວ່າ ຍັງປ່ອຍໃຫ້ຕ່າງປະເທດນຳໃຊ້ເຂົ້າວຽກບໍລິຫານ ແລະ ເງິນເດືອນຂອງຊ່ຽວຊານຕ່າງປະເທດສູງຢູ່; ການສະຫຼຸບລາຍງານການຈັດຕັ້ງປະຕິບັດທຶນໃຫ້ປະເທດຜູ້ໃຫ້ທຶນ ເຮັດຊັກຊ້າ ແລະ ບໍ່ລະອຽດ, ຊຶ່ງບາງປະເທດຜູ້ໃຫ້ທຶນບໍ່ພໍໃຈ ແລະ ຢຸດການຊ່ວຍເຫຼືອໄປກໍ່ມີ.
- ຄຊກລ ບໍ່ທັນໄດ້ມອບໝາຍໜ້າທີ່ລະອຽດໃຫ້ບັນດາກຳມະການທີ່ສັງກັດຢູ່ບັນດາກະຊວງ ແລະ ອົງການທຽບເທົ່າ, ບໍ່ມີຈຸດປະສານຢູ່ບັນດາກະຊວງ ແລະ ອົງການທຽບເທົ່າ, ບໍ່ມີລະບອບປະຊຸມແກ້ໄຂວຽກທີ່ເປັນປົກກະຕິ. ການຈັດຕັ້ງຄຸ້ມຄອງວຽກງານແກ້ໄຂບັນຫາ ລບຕ ຢູ່ຂັ້ນທ້ອງຖິ່ນ ບໍ່ເປັນເອກະພາບກັນ, ຂາດພະນັກງານທີ່ມີປະສົບການ ແລະ ຂາດງົບປະມານ.
- ບໍ່ກ້າຫານໃນການປັບປຸງການຄຸ້ມຄອງພາຍໃນ ໂດຍສະເພາະແມ່ນ ພາຍຫຼັງທີ່ສ້າງຕັ້ງ ຄຊກລ ຂຶ້ນແລ້ວບໍ່ໄດ້ປັບປຸງ ຄກລ ໃຫ້ຂຶ້ນກັບການຄຸ້ມຄອງຂອງ ຄຊກລ. ຢ້ານແຕ່ຕ່າງປະເທດບໍ່ໃຫ້ການຊ່ວຍເຫຼືອ ຈະເຮັດໃຫ້ພະນັກງານ-ກຳມະກອນ ບໍ່ມີເງິນເດືອນກິນ ແລະ ຢ້ານການຈັດຕັ້ງສະຫຼາຍຕົວ.

**3.2.2. ສາເຫດນອກຕົວ:**

- ພວກເຮົາຍັງຖືເບົາຕໍ່ການຈັດວາງການຈັດຕັ້ງແກ້ໄຂບັນຫາ ລບຕ. ຜ່ານມານີ້, ຍັງເອົາການຈັດຕັ້ງວຽກງານດັ່ງກ່າວນີ້ ໄປເກາະຫ້ອຍກັບພາກສ່ວນນັ້ນ ພາກສ່ວນນີ້; ປະທານ ແລະ ຮອງປະທານ ກໍ່ຄອບຕໍາແໜ່ງຢູ່ຂະແໜງອື່ນ, ບໍ່ສະດວກໃນການເຄື່ອນໄຫວວຽກງານ ລບຕ ປະຈໍາວັນ; ເມື່ອກ່ອນປະທານແມ່ນລະດັບຮອງນາຍົກ ປະຈຸບັນແມ່ນລະດັບລັດຖະມົນຕີ. ທັງໝົດນີ້ ເຮັດໃຫ້ການປະສານງານພາຍໃນບໍ່ເຂັ້ມແຂງ ແລະ ບົດບາດໃນການລະດົມທຶນຊ່ວຍເຫຼືອຈາກຕ່າງປະເທດກໍ່ບໍ່ສູງ.
- ບາງພາກສ່ວນທັງສູນກາງ ແລະ ທ້ອງຖິ່ນ ຍັງຖືວ່າວຽກງານແກ້ໄຂບັນຫາ ລບຕ ເປັນວຽກຂອງເອັນຈີໂອຂອງຕ່າງປະເທດ, ບໍ່ເປັນເຈົ້າການຜັນຂະຫຍາຍແຜນຍຸດທະສາດແກ້ໄຂບັນຫາ ລບຕ ເຂົ້າໃນແຜນພັດທະນາຂອງຕົນ.
- ການປະກອບສ່ວນງົບປະມານແຫ່ງລັດ ເຂົ້າໃນວຽກງານແກ້ໄຂບັນຫາ ລບຕ ຍັງມີໜ້ອຍເກີນໄປ, ບໍ່ທັນສອດຄ່ອງກັບລະບຽບການໃນການປະກອບທຶນສົມທົບຂອງລັດຖະບານ.
- ການຊ່ວຍເຫຼືອຂອງຕ່າງປະເທດ: ສ່ວນຫຼາຍຊ່ວຍເປັນໄລຍະສັ້ນ ແລະ ໜ້ອຍ; ບາງອົງການເອັນຈີໂອເຄື່ອນໄຫວບໍ່ມີແຜນການລະອຽດ; ສໍາລັບກອງທຶນຊ່ວຍເຫຼືອລ້າຂອງ ສປຊ ນັ້ນ ຍັງບໍ່ໄດ້ເຄື່ອນໄຫວແທດເໝາະກັບ ສະພາບຄວາມເປັນຈິງຂອງຄວາມຕ້ອງການຂອງຂະແໜງການແກ້ໄຂບັນຫາ ລບຕ ແທ້ເທື່ອ.
- ອຸປະກອນ, ເຕັກນິກ ແລະ ວິທີການສໍາຫຼວດ, ກວດກູ້ ແລະ ທໍາລາຍ ລບຕ ໃນປະຈຸບັນບໍ່ທັນສະໄໝ ແລະ ບໍ່ພຽງພໍກັບຄວາມຕ້ອງການຕົວຈິງ.

**4. ບົດຮຽນຖອດຖອນໄດ້.**

4.1. ການຈັດວາງການຈັດຕັ້ງວຽກງານແກ້ໄຂບັນຫາ ລບຕ ທັງສູນກາງ ແລະ ທ້ອງຖິ່ນ ຕ້ອງມີອໍານາດໃນການປະສານງານພາຍໃນ ພາຍນອກ ແລະ ມີລະບອບແບບແຜນວິທີເຮັດວຽກທີ່ຈະແຈ້ງ.

4.2. ການປະຕິບັດວຽກງານແກ້ໄຂບັນຫາ ລບຕ ຕ້ອງມີແຜນການ, ໂຄງການລະອຽດ, ຊຶ່ງຕ້ອງແມ່ນແຜນການ ແລະ ໂຄງການທີ່ມາຈາກກະຊວງ, ອົງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ. ພ້ອມນັ້ນ ກໍ່ຕ້ອງມີການປະສານງານສາຍຕັ້ງ-ສາຍຂວາງໃຫ້ດີ.

4.3. ຂໍ້ມູນ ລບຕ ຕ້ອງຈະແຈ້ງ ແລະ ຕ້ອງໃຫ້ພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າເຖິງໄດ້ງ່າຍ.

4.4. ຕ້ອງເອົາໃຈໃສ່ປະສານງານ ເພື່ອໂນ້ມນ້າວ, ທໍາຄວາມເຂົ້າໃຈກັບປະເທດຜູ້ໃຫ້ທຶນ, ອົງການສາກົນຕະຫຼອດຮອດອົງການປະຕິບັດງານຕ່າງໆ ໃຫ້ເຂົ້າໃຈແນວທາງນະໂຍບາຍຂອງພັກ ແລະ ທິດທາງແຜນການຂອງລັດຖະບານກ່ຽວກັບການແກ້ໄຂບັນຫາ ລບຕ.

4.5. ຕ້ອງຄຸ້ມຄອງທຶນຊ່ວຍເຫຼືອ, ຄຸ້ມຄອງອົງການປະຕິບັດງານຢ່າງຮັດກຸມ ເພື່ອຮັບປະກັນຄວາມໂປ່ງໃສໃນການນໍາໃຊ້ທຶນ ແລະ ຮັບປະກັນປະສິດທິພາບ ແລະ ປະສິດທິຜົນຂອງວຽກງານ.

4.6. ລັດຖະບານ ຕ້ອງປະກອບສ່ວນງົບປະມານແຫ່ງລັດເຂົ້າໃນວຽກງານແກ້ໄຂບັນຫາ ລບຕ ໃນລະດັບແນ່ນອນ.

**5. ສິ່ງທ້າທາຍ.**

5.1. ພື້ນທີ່ຕົກຄ້າງ ລບຕ ກວ້າງໃຫ່ຍຫຼາຍ, ຈໍານວນ ລບຕ ກໍ່ມີມະຫາສານ ແລະ ບັນຫາທີ່ເກີດຈາກ ລບຕ ກໍ່ໜັກໜ່ວງ.

5.2. ການເຮັດໃຫ້ບັນດາກະຊວງ, ອົງການທຽບເທົ່າ, ທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ ຜັນຂະຫຍາຍແຜນຍຸດທະສາດແຫ່ງຊາດ ແກ້ໄຂບັນຫາ ລບຕ ເຂົ້າໃນແຜນພັດທະນາຂອງແຕ່ລະພາກສ່ວນ.

5.3. ການປະສານງານ ເພື່ອໂນ້ມນ້າວ, ທໍາຄວາມເຂົ້າໃຈກັບປະເທດຜູ້ໃຫ້ທຶນ, ອົງການສາກົນຕະຫຼອດຮອດອົງການປະຕິບັດງານຕ່າງໆ ເຂົ້າໃຈແນວທາງນະໂຍບາຍຂອງພັກ ແລະ ທິດທາງແຜນການຂອງລັດຖະບານກ່ຽວກັບການແກ້ໄຂບັນຫາ ລບຕ ເພື່ອໃຫ້ໄດ້ມາເຊິ່ງທຶນຮອນ ແລະ ເຕັກນິກວິຊາການ.

5.4. ເຕັກນິກ ເຕັກໂນໂລຊີ ໃນການສຳຫຼວດ ແລະ ກວດກູ້ ລບຕ ທີ່ມີໃນປະຈຸບັນ ຍັງບໍ່ສອດຄ່ອງກັບສະພາບ ລບຕ ທີ່ມີຢູ່ໃນ ສປປ ລາວ.

**III. ແຜນການແກ້ໄຂບັນຫາ ລບຕ 5 ປີ, 2016-2020.**

**1. ບ່ອນອີງ.**

**1.1. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 8 (2016-2020): ໃນ 5 ປີຂ້າງໜ້ານີ້ ຂະແໜງການແກ້ໄຂບັນຫາ ລບຕ ຈະຕ້ອງສຸມໃສ່ຮັບໃຊ້ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 8 ຕາມບັນດາເປົ້າໝາຍດັ່ງລຸ່ມນີ້:**

- <u>ເປົ້າໝາຍ 1:</u> ເສດຖະກິດມີການເຕີບໂຕຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ສ້າງໄດ້ຄວາມສົມດູນຂອງການເຕີບໂຕ ໂດຍການສຸມໃສ່ສ້າງພື້ນຖານເສດຖະກິດໃຫ້ເຂັ້ມແຂງ ຫຼຸດຜ່ອນຄວາມເປາະບາງຂອງເສດຖະກິດ.
- <u>ເປົ້າໝາຍ 2</u>: ພັດທະນາຊັບພະຍາກອນມະນຸດ ແລະ ຍົກລະດັບຄວາມສາມາດຂອງບຸກຄະລາກອນຈາກພາກລັດ ແລະ ກຳລັງແຮງງານຈາກເອກະຊົນ, ຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າ ໄດ້ຮັບການແກ້ໄຂຢ່າງທົ່ວເຖິງ, ທຸກເຜົ່າຊົນ ແລະ ເພດໄວ ສາມາດເຂົ້າເຖິງການສຶກສາ ແລະ ການບໍລິການສາທາລະນະສຸກຢ່າງທົ່ວເຖິງ ແລະ ມີຄຸນນະພາບ.
- <u>ເປົ້າໝາຍ 3</u>: ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຮັບການປົກປັກຮັກສາ ແລະ ນຳໃຊ້ຢ່າງມີປະສິດທິຜົນ ຕາມທິດສີຂຽວ ແລະ ຍືນຍົງ, ກຽມພ້ອມຮັບມືກັບໄພພິບັດທາງທຳມະຊາດ ແລະ ການປ່ຽນແປງຂອງດິນຟ້າອາກາດຢ່າງມີປະສິດທິພາບ ພ້ອມທັງ ກໍ່ສ້າງຄືນສິ່ງທີ່ຖືກຜົນກະທົບຈາກໄພທຳມະຊາດໃຫ້ດີກວ່າເກົ່າ.

**1.2. ແຜນຍຸດທະສາດແຫ່ງຊາດ ແກ້ໄຂບັນຫາ ລບຕ "ເສັ້ນທາງກ້າວສູ່ຄວາມປອດໄພ 2" ສຳລັບປີ 2011-2020:** ແຜນຍຸດທະສາດແຫ່ງຊາດດັ່ງກ່າວ ຍັງເປັນບ່ອນອີງໃນການວາງແຜນການ 5 ປີຂອງຂະແໜງການແກ້ໄຂບັນຫາ ລບຕ ໃນຕໍ່ໜ້າ, ຊຶ່ງຄາດໝາຍຕ່າງໆ ແມ່ນໄດ້ລະບຸໄວ້ໃນໜ້າທີ 2 ຂອງເອກະສານສະບັບນີ້.

**2. ທິດທາງໜ້າທີ່ລວມ.**

- ສຳຫຼວດ ແລະ ກຳນົດພື້ນທີ່ຜົນກະທົບຈາກ ລບຕ ໃນຂອບເຂດທົ່ວປະເທດໃຫ້ຊັດເຈນ.
- ຮັບປະກັນນຳເອົາການກວດກູ້ ລບຕ ປະກອບສ່ວນຮັບໃຊ້ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8.
- ສືບຕໍ່ໃສ່ໂຄສະນາທີ່ມາ ແລະ ຜົນຮ້າຍຂອງ ລບຕ ໃຫ້ກວມລວມທົ່ວປະເທດ.
- ສືບຕໍ່ຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ ໃຫ້ໄດ້ຮັບການປິ່ນປົວ, ຟື້ນຟູ ແລະ ສ້າງເສດຖະກິດຄອບຄົວ.
- ເອົາໃຈໃສ່ປັບປຸງການຈັດຕັ້ງ ແລະ ບຸກຄະລາກອນ, ລະບົບການວາງແຜນ, ການລະດົມ ແລະ ຄຸ້ມຄອງທຶນ, ການຄຸ້ມຄອງຄຸນນະພາບການກວດກູ້ ແລະ ການປະເມີນຜົນວຽກງານແກ້ໄຂບັນຫາ ລບຕ ໃຫ້ໜັກແໜ້ນ.

**3. ຄາດໝາຍຕົ້ນຕໍ.**

- ສຳຫຼວດບໍ່ແມ່ນວິຊາການຢູ່ 3,860 ບ້ານ ທີ່ມີຂໍ້ມູນການຖິ້ມລະເບີດ ເພື່ອຊອກຫາຈຸດຫຼັກຖານ ລບຕ.
- ສຳຫຼວດວິຊາການ ໄປຕາມຫຼັກຖານທີ່ໄດ້ຈາກການສຳຫຼວດບໍ່ແມ່ນວິຊາການ ເພື່ອຊອກຫາພື້ນທີ່ ລບຕ ຕົກຄ້າງ (CHAs-ຊີເອັດເອ).
- ດຳເນີນການກວດກູ້ພື້ນທີ່ ລບຕ ຕົກຄ້າງ ຢູ່ຈຸດສຸມພັດທະນາ, ໂຄງການພັດທະນາຕ່າງໆຕາມບູລິມະສິດພັດທະນາແຕ່ລະປີຂອງລັດຖະບານ ແລະ ພື້ນທີ່ທຳມາຫາກິນຂອງປະຊາຊົນລາວບັນດາເຜົ່າໃຫ້ສຳເລັດ.

- ສືບຕໍ່ດຳເນີນການໂຄສະນາທີ່ມາ ແລະ ຜົນຮ້າຍຂອງ ລບຕ ແນໃສ່ຫຼຸດຈຳນວນຜູ້ຖືກເຄາະຮ້າຍຈາກ ລບຕ ໃຫ້ຕ່ຳກວ່າ 40 ຄົນຕໍ່ປີ.

- ສືບຕໍ່ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ທາງດ້ານການປິ່ນປົວ ແລະ ຟື້ນຟູສຸຂະພາບຕາມຕົວຈິງ ແລະ ປະກອບອາຊີບໃຫ້ເຂົາເຈົ້າໃຫ້ໄດ້ 1,500 ຄົນ.

**4. ວຽກຈຸດສຸມໃນແຕ່ລະດ້ານ.**

**4.1. ວຽກໂຄສະນາສຶກສາຄວາມສ່ຽງຈາກ ລບຕ.**

- ປະກາດໃຊ້ຄຳສັ່ງຂອງນາຍົກ ວ່າດ້ວຍການເພີ່ມທະວີການໂຄສະນາທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ.

- ເຊື່ອມສານແຜນການໂຄສະນາກ່ຽວກັບທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ ເຂົ້າໃນແຜນຂອງ ບັນດາກະຊວງ, ອົງການລັດທຽບເທົ່າ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

- ສົມທົບກັບກະຊວງສຶກສາທິການ ແລະ ກິລາ ຜະລິດຫຼັກສູດສອນ ລບຕ ຂັ້ນມັດທະຍົມ, ສະໜອງອຸປະກອນການສິດສອນ, ຝຶກອົບຮົມຄູຢູ່ໃນວິທະຍາໄລຄູ ເພື່ອໃຫ້ສາມາດສິດສອນໄດ້ໃນທົ່ວປະເທດ.

- ສົ່ງເສີມໃຫ້ກະຊວງສຶກສາທິການ ແລະ ກິລາ ສິດສອນວິຊາ ລບຕ ຢູ່ໂຮງຮຽນປະຖົມ ແລະ ມັດທະຍົມ.

- ສ້າງຄວາມເຂັ້ມແຂງໃຫ້ອາສາສະໝັກບ້ານທີ່ມີແລ້ວ ແລະ ອາສາສະໝັກໃໝ່ ໃຫ້ກວມບັນດາບ້ານທີ່ມີ ລບຕ.

- ສົມທົບກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ດຳເນີນການໂຄສະນາທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ ໂດຍຜ່ານວິທະຍຸ, ໂທລະໂຄ່ງ ແລະ ອື່ນໆ.

- ປະສານໃຫ້ບັນດາອົງການປະຕິບັດງານ ເພື່ອໃຫ້ມີການໂຄສະນາໃຫ້ຖືກຕາມທິດທາງແຜນການ, ໃຫ້ມີການສະຫຼຸບລາຍງານການຈັດຕັ້ງປະຕິບັດ ແລະ ປະເມີນຜົນ.

**4.2. ວຽກຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.**

- ສ້າງ ແລະ ປັບປຸງລະບົບການເກັບກຳຂໍ້ມູນອຸບັດເຫດ, ຂໍ້ມູນຜູ້ຖືກເຄາະຮ້າຍ ແລະ ຂໍ້ມູນຄວາມຕ້ອງການຂອງຜູ້ລອດຊີວິດຈາກ ລບຕ ຢູ່ບັນດາແຂວງທີ່ມີ ລບຕ ຕົກຄ້າງໃຫ້ຈະແຈ້ງ, ສາມາດເຄື່ອນໄຫວໄດ້ຢ່າງເປັນຮູບປະທຳ ແລະ ລາຍງານຂໍ້ມູນເຂົ້າຖານຂໍ້ມູນ ລບຕ ແຫ່ງຊາດ ໄດ້ຢ່າງທັນການ.

- ວິເຄາະຂໍ້ມູນຄວາມຕ້ອງການຂອງຜູ້ລອດຊີວິດຈາກ ລບຕ* ເພື່ອວາງແຜນ ແລະ ຈັດລຽງບູລິມະສິດໃນການຊ່ວຍເຫຼືອເຂົາເຈົ້າທາງດ້ານການປິ່ນປົວການແພດ, ຟື້ນຟູດ້ານໜ້າທີ່ການ, ປະກອບອາຊີບ ເພື່ອສ້າງເສດຖະກິດຄອບຄົວ.

- ເຊື່ອມສານແຜນວຽກຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ ແລະ ຜູ້ຖືກເຄາະຮ້າຍຈາກ ລບຕ ເຂົ້າໃນແຜນຍຸດທະສາດຂອງບັນດາກະຊວງ, ອົງການລັດທຽບເທົ່າ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ.

- ປະສານງານ ແລະ ຊຸກຍູ້ ບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອສະໜອງການປິ່ນປົວການແພດ, ຟື້ນຟູດ້ານໜ້າທີ່ການ ແລະ ປະກອບອາຊີບ ເພື່ອສ້າງເສດຖະກິດຄອບຄົວໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ ລບຕ.

*ຂໍ້ມູນຄວາມຕ້ອງການຂອງຜູ້ລອດຊີວິດຈາກ ລບຕ ຢູ່ບັນດາແຂວງທີ່ໄດ້ວິເຄາະແລ້ວ.

| ລໍາດັບ | ຊື່ແຂວງ | ຈໍານວນ | | ລວມ |
|---|---|---|---|---|
| | | ຊາຍ | ຍິງ | |
| 1 | ນະຄອນຫຼວງ | 9 | 2 | **11** |
| 2 | ຫຼວງພະບາງ | 597 | 53 | **650** |
| 3 | ຫົວພັນ | 1,638 | 193 | **1,831** |
| 4 | ຊຽງຂວາງ | 1,058 | 238 | **1,296** |
| 5 | ວຽງຈັນ | 3 | 0 | **3** |
| 6 | ບໍລິຄໍາໄຊ | 267 | 32 | **299** |
| 7 | ຄໍາມ່ວນ | 898 | 137 | **1,035** |
| 8 | ສະຫວັນນະເຂດ | 1,567 | 163 | **1,730** |
| 9 | ສາລະວັນ | 843 | 134 | **977** |
| 10 | ເຊກອງ | 91 | 26 | **117** |
| 11 | ຈໍາປາສັກ | 413 | 54 | **467** |
| 12 | ອັດຕະປື | 172 | 39 | **211** |
| 13 | ໄຊສົມບູນ | 106 | 17 | **123** |
| **ລວມ** | | **7,662** | **1,088** | **8,750** |

**4.3. ການກວດກູ້ ລບຕ.**

- ປະກາດໃຊ້ຄໍາສັ່ງນາຍົກ ວ່າດ້ວຍການກວດກູ້ ລບຕ ຢູ່ໂຄງການພັດທະນາເສດຖະກິດ-ສັງຄົມຕ່າງໆຢູ່ ສປປ ລາວ.
- ສືບຕໍ່ພັດທະນາມາດຕະຖານການສໍາຫຼວດ ລບຕ ໃຫ້ແທດເໝາະກັບສະພາບຄວາມເປັນຈິງ.
- ສ້າງລະບົບການບັນທຶກ ແລະ ລາຍງານການສໍາຫຼວດ, ການກວດກູ້ ລບຕ ຢູ່ບັນດາແຂວງໃຫ້ມີຄວາມສາມາດເຄື່ອນໄຫວ ແລະ ລາຍງານເຂົ້າຖານຂໍ້ມູນ ລບຕ ແຫ່ງຊາດ.
- ເຊື່ອມສານແຜນການສໍາຫຼວດ ແລະ ກວດກູ້ ລບຕ ເຂົ້າແຜນພັດທະນາຂອງບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ.
- ປະສານກັບບັນດາອົງການປະຕິບັດງານ ເພື່ອດໍາເນີນການສໍາຫຼວດບໍ່ແມ່ນວິຊາການ ແລະ ວິຊາການ* ເພື່ອຊອກຫາພື້ນທີ່ ລບຕ ຕົກຄ້າງ ແລະ ບັນທຶກລາຍງານເຂົ້າໃນລະບົບຖານຂໍ້ມູນ ລບຕ ແຫ່ງຊາດ.
- ປະສານກັບບັນດາອົງການປະຕິບັດງານ ເພື່ອກວດກູ້ພື້ນທີ່ ລບຕ ຕົກຄ້າງຕາມຈຸດສຸມພັດທະນາ, ໂຄງການພັດທະນາຕ່າງໆຕາມບູລິມະສິດພັດທະນາແຕ່ລະປີຂອງລັດຖະບານ ແລະ ພື້ນທີ່ທໍາມາຫາກິນຂອງປະຊາຊົນລາວບັນດາເຜົ່າ.
- ພັດທະນາເຕັກນິກ, ເຕັກໂນໂລຊີ ແລະ ວິທີການໃນການສໍາຫຼວດ, ການກວດກູ້ ແລະ ການທໍາລາຍ ລບຕ ກັບບັນດາປະເທດ ແລະ ອົງການສາກົນ.
- ປະເມີນຜົນໄດ້ຮັບ ພາຍຫຼັງກວດກູ້ ລບຕ ແລ້ວ.

*ຂໍ້ມູນຮ່ອງຮອຍ ລບຕ ຕົກຄ້າງ ແຍກຕາມແຂວງ, ເມືອງ ແລະ ບ້ານ.

| ລຳດັບ | ແຂວງ | ຈຳນວນເມືອງ | ຈຳນວນບ້ານ |
|---|---|---|---|
| 1 | ຜົ້ງສາລີ | 6 | 69 |
| 2 | ຫຼວງນ້ຳທາ | 3 | 5 |
| 3 | ບໍ່ແກ້ວ | 3 | 15 |
| 4 | ອຸດົມໄຊ | 8 | 101 |
| 5 | ຫຼວງພະບາງ | 11 | 361 |
| 6 | ຫົວພັນ | 8 | 378 |
| 7 | ຊຽງຂວາງ | 7 | 463 |
| 8 | ໄຊສົມບູນ | 5 | 62 |
| 9 | ໄຊຍະບູລີ | 11 | 30 |
| 10 | ວຽງຈັນ | 8 | 55 |
| 11 | ນະຄອນຫຼວງ | 4 | 5 |
| 12 | ບໍລິຄຳໄຊ | 7 | 172 |
| 13 | ຄຳມ່ວນ | 9 | 390 |
| 14 | ສະຫວັນນະເຂດ | 15 | 668 |
| 15 | ສາລະວັນ | 8 | 477 |
| 16 | ຈຳປາສັກ | 11 | 239 |
| 17 | ເຊກອງ | 4 | 229 |
| 18 | ອັດຕະປື | 5 | 141 |
| **ລວມ:** | **18** | **133** | **3,860** |

**4.4. ວຽກບໍລິຫານຄຸ້ມຄອງ.**

**4.4.1. ວຽກຂໍ້ມູນຂ່າວສານ:**

- ບໍາລຸງຮັກສາຂໍ້ມູນຂ່າວສານໃນຖານຂໍ້ມູນ ລບຕ ແຫ່ງຊາດ, ວິເຄາະ ແລະ ສະໜອງຂໍ້ມູນກ່ຽວກັບ ລບຕ ໃຫ້ແກ່ບັນດາຄູ່ຮ່ວມງານ ແລະ ພາກສ່ວນຕ່າງໆໃຫ້ທັນການ.
- ພັດທະນາມາດຕະຖານ ແລະ ຄູ່ມືການນໍາໃຊ້ ແລະ ການຄຸ້ມຄອງຖານຂໍ້ມູນ ລບຕ ແຫ່ງຊາດ.
- ພັດທະນາຂີດຄວາມສາມາດໃຫ້ຫ້ອງການ ຄກລຂ ສາມາດເກັບກໍາ, ວິເຄາະ, ບັນທຶກ ແລະ ລາຍງານຂໍ້ມູນການປະຕິບັດວຽກງານແກ້ໄຂບັນຫາ ລບຕ ເຂົ້າຖານຂໍ້ມູນ ລບຕ ແຫ່ງຊາດ ແລະ ສາມາດສະໜອງຂໍ້ມູນຂ່າວສານກ່ຽວກັບ ລບຕ ຢູ່ຂັ້ນແຂວງໃຫ້ທັນການ.
- ສືບຕໍ່ພັດທະນາຂີດຄວາມສາມາດໃຫ້ບັນດາອົງການປະຕິບັດງານ ລວມທັງ ບໍລິສັດກວດກູ້ ລບຕ ໃຫ້ສາມາດເກັບກໍາ, ວິເຄາະ, ບັນທຶກ ແລະ ລາຍງານຂໍ້ມູນການປະຕິບັດວຽກງານແກ້ໄຂບັນຫາ ລບຕ.
- ປະສານໃຫ້ບັນດາອົງການປະຕິບັດງານຕ່າງໆ ທີ່ປະຕິບັດໜ້າທີ່ແກ້ໄຂບັນຫາ ລບຕ ໃຫ້ລາຍງານຂໍ້ມູນການປະຕິບັດງານຂອງຕົນໃຫ້ຫ້ອງການ ຄກລຂ.

**4.4.2. ວຽກຄຸ້ມຄອງກວດກາຄຸນນະພາບ ແລະ ຝຶກອົບຮົມ:**

- ທົບທວນ ແລະ ປັບປຸງມາດຕະຖານແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາ ລບຕ ໃຫ້ແທດເໝາະກັບສະພາບຄວາມເປັນຈິງ.

- ພັດທະນາຂີດຄວາມສາມາດໃຫ້ວິຊາການກ່ຽວກັບການຄຸ້ມຄອງກວດກາຄຸນນະພາບຂອງວຽກງານແກ້ໄຂບັນຫາ ລບຕ.

- ດຳເນີນການກວດກາຄຸນນະພາບຂອງເນື້ອທີ່ກວດກູ້ ໂດຍອີງໃສ່ມາດຕະຖານແຫ່ງຊາດ ເພື່ອໃຫ້ຄຳແນະນຳໃຫ້ບັນດາອົງການປະຕິບັດງານ ປັບປຸງວຽກງານຂອງເຂົາເຈົ້າ ໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ.

- ປັບປຸງຫຼັກສູດວິຊາການການກວດກູ້ ຂັ້ນ 1-4, ແພດ, ການສຳຫຼວດ ແລະ ການໂຄສະນາທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ.

- ຝຶກອົບຮົມກຳລັງຮັບໃຊ້ການສຳຫຼວດ ແລະ ກວດກູ້ ລບຕ ໂດຍສະເພາະແມ່ນເນັ້ນໃສ່ຝຶກກອງເກັບກູ້ລະເບີດມະນຸດສະທຳຂອງກອງທັບ ຈຳນວນ 25 ທີມ.

### 4.4.3. ວຽກແຜນການ ແລະ ປະຊາສຳພັນ:

- ປະສານກັບສື່ມວນຊົນ ລົງເກັບກຳຂ່າວສະພາບການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ຢູ່ບັນດາແຂວງທີ່ມີ ລບຕ ຕົກຄ້າງ ເພື່ອໂຄສະນາແຕ່ລະໄລຍະ.

- ນຳພາບັນດາປະເທດຜູ້ໃຫ້ທຶນ ລົງຢ້ຽມຢາມສະໜາມກວດກູ້ ລບຕ ເນື່ອງໃນໂອກາດທີ່ມາຮ່ວມກອງປະຊຸມໂຕະມົນປະຈຳປີຢູ່ ສປປ ລາວ.

- ປັບປຸງສື່ໂຄສະນາຕ່າງໆເຊັ່ນ: ເວບໄຊ້, ໃບປິວ, ແຜ່ນພັບ, ປຶ້ມບົດລາຍງານ ແລະ ອື່ນໆ. ພ້ອມທັງເຂົ້າຮ່ວມວາງສະແດງຜົນງານການເຄື່ອນໄຫວວຽກງານ ລບຕ ຢູ່ໃນກອງປະຊຸມຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

- ຈັດພິທີສະເຫຼີມສະຫຼອງວັນຕ້ານລະເບີດຝັງດິນສາກົນ ແລະ ວັນມີຜົນບັງຄັບໃຊ້ສົນທິສັນຍາລະເບີດລູກຫວ່ານທຸກໆປີ.

- ປະສານບັນດາກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນ ເພື່ອສ້າງແຜນການຂອງຂະແໜງການແກ້ໄຂບັນຫາ ລບຕ ແຕ່ລະໄລຍະ, ຊຸກຍູ້ຕິດຕາມ ແລະ ລາຍງານໃຫ້ແກ່ລັດຖະບານ ແລະ ປະເທດຜູ້ໃຫ້ທຶນຢ່າງເປັນປົກກະຕິ.

- ຈັດກອງປະຊຸມຕ່າງໆເຊັ່ນ: ກອງປະຊຸມຄະນະຊີ້ນຳໂຄງການສ້າງຄວາມເຂັ້ມແຂງໃຫ້ຫ້ອງການ ຄຊກລ ແລະ ຄກລ; ກອງປະຊຸມຄະນະຊີ້ນຳກອງທຶນຊ່ວຍເຫຼືອລ້າ ສຳລັບວຽກງານແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ; ກອງປະຊຸມຂະແໜງແກ້ໄຂບັນຫາ ລບຕ; ກອງປະຊຸມເວທີປຶກສາຫາລືວຽກງານແກ້ໄຂບັນຫາ ລບຕ.

### 4.4.4. ວຽກງານຮ່ວມມື ແລະ ລະດົມທຶນ:

- ສະຫຼຸບ, ລາຍງານ ກ່ຽວກັບຜົນການຈັດຕັ້ງປະຕິບັດບັນດາພັນທະຂອງສົນທິສັນຍາສາກົນກ່ຽວກັບ ລບຕ ທີ່ ສປປ ລາວ ເປັນພາຄີ.

- ຄົ້ນຄ້ວາສ້າງຮ່າງກົດໝາຍການປະຕິບັດສົນທິສັນຍາ ວ່າດ້ວຍການຕ້ານລະເບີດລູກຫວ່ານຂອງ ສປປ ລາວ.

- ຄົ້ນຄ້ວາສ້າງບົດສະເໜີໂຄງການ ເພື່ອຂໍການຊ່ວຍເຫຼືອຈາກພາຍໃນ ແລະ ຕ່າງປະເທດ ເຂົ້າໃນວຽກງານແກ້ໄຂບັນຫາ ລບຕ.

- ປັບປຸງພາລະບົດບາດຂອງກອງທຶນຊ່ວຍເຫຼືອລ້າ ແກ້ໄຂບັນຫາ ລບຕ ແນໃສ່ໃຫ້ຝ່າຍລາວມີສ່ວນຮ່ວມໃນການຕັດສິນໃຈການຮັບ-ການຈ່າຍຫຼາຍຂຶ້ນ; ສືບຕໍ່ປັບປຸງໃຫ້ ເອັນຈີໂອ ມີແຜນການເຄື່ອນໄຫວຂອງຕົນແຕ່ລະໄລຍະ ແລະ ເອົາໃຈໃສ່ປະຕິບັດລະບອບການລາຍງານ, ການປະຕິບັດວຽກງານ, ການຮັບ-ການຈ່າຍທຶນໃຫ້ ຄຊກລ ຢ່າງເປັນປົກກະຕິ; ປັບປຸງການປະສານງານກັບປະເທດຜູ້ໃຫ້ທຶນ ໃຫ້ປະກອບສ່ວນຊ່ວຍພວກເຮົາເປັນໄລຍະຍາວ ແລະ ປະສານສົມທົບກັນຄຸ້ມຄອງການນຳໃຊ້ທຶນໃຫ້ມີປະສິດທິຜົນດີກວ່າເກົ່າ.

- ກະກຽມເຂົ້າຮ່ວມກອງປະຊຸມປະຈຳປີຫົວໜ້າອົງການແກ້ໄຂບັນຫາ ລບຕ ຢູ່ເຈນີວາ, ກອງປະຈຳປີສົນທິສັນຍາຕ້ານລະເບີດລູກຫວ່ານ, ສົນທິສັນຍາອາວຸດທົ່ວໄປ ແລະ ສົນທິສັນຍາລະເບີດບໍ່ທັນແຕກອື່ນໆ.

- ສືບຕໍ່ລະດົມທຶນເຂົ້າໃນຂະແໜງການແກ້ໄຂບັນຫາ ລບຕ, ຊຶ່ງທຶນດັ່ງກ່າວຈະຜ່ານກອງທຶນຊ່ວຍເຫຼືອລ້າຂອງ ສປຊ, ການຮ່ວມມືສອງຝ່າຍ, ຜ່ານອົງການ ເອັນຈີໂອ ຂອງຕ່າງປະເທດ ແລະ ຊ່ອງທາງອື່ນໆ. ຄາດຄະເນຄວາມຕ້ອງການທຶນຕົວຈິງໃນ 5 ປີຂ້າງໜ້າ ມີດັ່ງລຸ່ມນີ້:

**+ ທຶນສຳລັບການສຳຫຼວດ ແລະ ກວດກູ້:**

**➢ ທຶນສຳລັບການສຳຫຼວດບໍ່ແມ່ນວິຊາການ: 3,860 ບ້ານ ຈະໃຫ້ສຳເລັດພາຍໃນ 4 ປີ (2016-2019).**

| ປີ | 2016 | 2017 | 2018 | 2019 | ລວມ |
|---|---|---|---|---|---|
| ຈຳນວນທີມ | 34 | | 46 | 46 | 46 |
| ຈຳນວນບ້ານ | 698 | 950 | 1,106 | 1,106 | 3,860 |
| ຄ່າໃຊ້ຈ່າຍ (ໂດລາ ສຫລ) | 1,2 ລ້ານ | 1,7 ລ້ານ | 1,8 ລ້ານ | 2,1 ລ້ານ | 6,8 ລ້ານ |

**➢ ທຶນສຳລັບການສຳຫຼວດວິຊາການ: 3,860 ບ້ານ ໃຫ້ສຳເລັດພາຍໃນ 5 ປີ (2016-2020).**

| ປີ | 2016 | 2017 | 2018 | 2019 | 2020 | ລວມ |
|---|---|---|---|---|---|---|
| ຈຳນວນທີມ | 64 | ຈາກ 64 ເປັນ 129 | 129 | 129 | 129 | 129 |
| ຈຳນວນບ້ານ | 256 | 338 | 591 | 591 | 591 | 2,367 |
| ຄ່າໃຊ້ຈ່າຍ (ໂດລາ ສຫລ) | 6,1 ລ້ານ | 13,8 ລ້ານ | 13 ລ້ານ | 13,7 ລ້ານ | 14,3 ລ້ານ | 60,9 ລ້ານ |

**➢ ທຶນສຳລັບການກວດກູ້ ລບຕ (2016-2020).**

| ປີ | 2016 | 2017 | 2018 | 2019 | 2020 | ລວມ |
|---|---|---|---|---|---|---|
| ຈຳນວນທີມ | 108 | 108 | 108 | 108 | 108 | 108 |
| ຈຳນວນເນື້ອທີ່ ລບຕ ຕົກຄ້າງ (ເຮັກຕາ) | 4,500 | 4,500 | 4,500 | 4,500 | 4,500 | 22,500 |
| ຄ່າໃຊ້ຈ່າຍ (ໂດລາ ສຫລ) | 10,3 ລ້ານ | 10,3 ລ້ານ | 10,9 ລ້ານ | 11,4 ລ້ານ | 11,9 ລ້ານ | 54,8 ລ້ານ |

+ ການຊ່ວຍເຫຼືອສ້າງເສດຖະກິດຄອບຄົວໃຫ້ຜູ້ຖືກເຄາະຮ້າຍຈາກ ລບຕ 1,500 ຄົນ ຈະໃຊ້ງົບປະມານ 2,3 ລ້ານໂດລາ ສຫລ.

+ ການໂຄສະນາທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ ຢູ່ບັນດາແຂວງທີ່ມີຜົນກະທົບຈາກ ລບຕ ໃນທົ່ວປະເທດ ຈະໃຊ້ງົບປະມານຈຳນວນ 5 ລ້ານໂດລາ ສຫລ.

+ ສ້າງຄວາມເຂັ້ມແຂງໃຫ້ກອງເກັບກູ້ລະເບີດມະນຸດສະທຳ ຈະໃຊ້ງົບປະມານ ຈຳນວນ 7 ລ້ານໂດລາ ສຫລ.

+ ສ້າງສູນຝຶກອົບຮົມ ລບຕ ແຫ່ງຊາດ ຈະໃຊ້ງົບປະມານຈຳນວນ 10 ລ້ານໂດລາ ສຫລ.

+ ງົບປະມານບໍລິຫານຫ້ອງການ ຄຊກລ ຈະໃຊ້ງົບປະມານຈຳນວນ 12,5 ລ້ານໂດລາ ສຫລ.

**ລວມຄວາມຕ້ອງການທຶນເຂົ້າໃນວຽກງານແກ້ໄຂບັນຫາ ລບຕ ມີທັງໝົດ 159,3 ລ້ານໂດລາ ສຫລ, ແຕ່ໃນນີ້ ບໍ່ທັນໄດ້ລວມທຶນສຳລັບການກວດກູ້ ລບຕ ທີ່ຈະຖືກຢືນຢັນໃໝ່ ພາຍຫຼັງເຮັດການສຳຫຼວດວິຊາການ.**

**4.4.5. ວຽກການຈັດຕັ້ງ ແລະ ການປະສານງານ:**

- ກໍານົດຄວາມຮັບຜິດຊອບໃຫ້ບັນດາກໍາມະການ ຄຊກລ ຢູ່ບັນດາກະຊວງ ແລະ ອົງການທຽບເທົ່າໃຫ້ຈະແຈ້ງ.

- ປັບປຸງລະບອບແບບແຜນວິທີເຮັດວຽກຂອງ ຄຊກລ ໂດຍສະເພາະໃຫ້ມີລະບອບປະຊຸມແຕ່ລະໄລຍະເປັນປົກກະຕິ. ພ້ອມນັ້ນ, ກໍ່ປັບປຸງໃຫ້ມີການນໍາຂອງ ຄຊກລ ເຮັດວຽກປະຈໍາການ 1 ທ່ານ ແລະ ສ້າງຈຸດປະສານງານວຽກງານແກ້ໄຂບັນຫາ ລບຕ ຢູ່ບັນດາກະຊວງ ແລະ ອົງການທຽບເທົ່າ ຕາມດໍາລັດ 043/ລບ, ລົງວັນທີ 3 ກຸມພາ 2015.

- ປັບປຸງຫ້ອງການຊ່ວຍວຽກ (ຫ້ອງການ ຄຊກລ) ໃຫ້ສາມາດເຄື່ອນໄຫວເປັນເສນາທິການ, ປະສານງານ ແລະ ບໍລິການວຽກງານແກ້ໄຂບັນຫາ ລບຕ ໃຫ້ຄ່ອງຕົວກວ່າເກົ່າ; ປັບປຸງການພົວພັນລະຫວ່າງຫ້ອງການ ຄຊກລ ກັບ ຄກລ ແນໃສ່ໃຫ້ 2 ໜ່ວຍງານດັ່ງກ່າວ ໄດ້ເຄື່ອນໄຫວຕາມພາລະບົດບາດຂອງຕົນເອງ.

- ປັບປຸງການຈັດຕັ້ງຄຸ້ມຄອງແກ້ໄຂບັນຫາ ລບຕ ແລະ ຫ້ອງການຊ່ວຍຂອງການຈັດຕັ້ງດັ່ງກ່າວຢູ່ບັນດາແຂວງທີ່ມີ ລບຕ ໃຫ້ຈະແຈ້ງ ແລະ ເປັນເອກະພາບກັນ ທາງດ້ານບ່ອນສັງກັດ, ໂຄງປະກອບບຸກຄະລາກອນ, ມີລະບອບແບບແຜນວິທີເຮັດວຽກ ແລະ ມີງົບປະມານເຄື່ອນໄຫວ.

- ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານກໍາມະກອນລາວທົ່ວຂະແໜງການ ເພື່ອຮັບປະກັນເຊື່ອໝັ້ນຕໍ່ການນໍາພາຂອງພັກ ແລະ ປະຕິບັດລະບຽບກົດໝາຍ ແລະ ທິດທາງແຜນການຂອງລັດເປັນຢ່າງດີ. ຄຸ້ມຄອງຊ່ຽວຊານຕ່າງປະເທດໃຫ້ເຂົ້າໃຈແນວທາງນະໂຍບາຍ ແລະ ທິດທາງແຜນການຂອງລັດຖະບານ, ສະໜັບສະໜູນພວກເຮົາຢ່າງສະເໝີຕົ້ນສະເໝີປາຍ.

**5. ວຽກຈຸດສຸມສໍາລັບປີ 2016.**

**5.1. ຂົງເຂດປະຕິບັດງານ:**

**5.1.1. ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ:**

❖ **ຄາດໝາຍ: ຫຼຸດຜ່ອນຈໍານວນຜູ້ຖືກເຄາະຮ້າຍຈາກ ລບຕ ໃຫ້ຕໍ່າກວ່າ 40 ຄົນຕໍ່ປີ.**

❖ **ໜ້າວຽກ**:

- ສະເໜີຂັ້ນເທິງປະກາດໃຊ້ຄໍາສັ່ງນາຍົກ ວ່າດ້ວຍການເພີ່ມທະວີການໂຄສະນາທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ.

- ຝຶກອົບຮົມອາສາສະໝັກບ້ານ 56 ຄົນ ຢູ່ແຂວງຫຼວງພະບາງ, ຊຽງຂວາງ, ສະຫວັນນະເຂດ ແລະ ຈໍາປາສັກ.

- ພິມປຶ້ມຫຼັກສູດ ລບຕ 1,400 ຊຸດ (1 ຊຸດມີ 12 ຫົວ) ແລະ ພິມເສື້ອໃຫ້ອາສາສະໝັກບ້ານ 650 ຜືນ.

- ປະສານກັບກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ດໍາເນີນລາຍການວິທະຍຸ ລບຕ ຢູ່ແຂວງຄໍາມ່ວນ, ສາລະວັນ, ເຊກອງ ແລະ ຈໍາປາສັກ.

- ປະສານງານ ແລະ ຊຸກຍູ້ ໃຫ້ອົງການພາກລັດ ແລະ ເອກະຊົນ ໂຄສະນາທີ່ມາ ແລະ ຄວາມອັນຕະລາຍຈາກ ລບຕ ຕາມແຜນການ.

- ລົງຕິດຕາມ, ກວດກາ, ຊຸກຍູ້, ປະເມີນຜົນ ແລະ ສະຫຼຸບລາຍງານວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ.

**5.1.2. ວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ:**

❖ **ຄາດໝາຍ: ຊ່ວຍເຫຼືອການຝຶກອົບຮົມວິຊາຊີບ ແລະ ສ້າງເສດຖະກິດຄອບຄົວໃຫ້ຜູ້ລອດຊີວິດຈາກ ລບຕ 300 ຄົນ.**

❖ **ໜ້າວຽກ:**

- ປະສານງານກັບອໍານາດການປົກຄອງແຂວງສະຫວັນນະເຂດ, ຊຽງຂວາງ ແລະ ຫົວພັນ ເພື່ອຄັດເລືອກເປົ້າໝາຍຜູ້ລອດຊີວິດຈາກ ລບຕ ທີ່ຈະເຂົ້າຝຶກອົບຮົມວິຊາຊີບ ແລະ ສ້າງເສດຖະກິດຄອບຄົວ.

- ສະໜອງການຝຶກອົບຮົມວິຊາຊີບ ແລະ ສ້າງເສດຖະກິດຄອບຄົວໃຫ້ຜູ້ລອດຊີວິດຈາກ ລບຕ 60 ຄົນ ຢູ່ແຂວງສະຫວັນນະເຂດ, ຊຽງຂວາງ ແລະ ຫົວພັນ.

- ປະສານງານ ແລະ ຊຸກຍູ້ ໃຫ້ອົງການພາກລັດ ແລະ ເອກະຊົນ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ທາງການປິ່ນປົວ ແລະ ຟື້ນຟູສຸຂະພາບໃຫ້ທົ່ວເຖິງ.

- ລົງຕິດຕາມ, ກວດກາ, ຊຸກຍູ້, ປະເມີນຜົນ ແລະ ສະຫຼຸບລາຍງານວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກ ລບຕ.

- ຕິດຕາມ, ເກັບກຳຂໍ້ມູນຜູ້ຖືກເຄາະຮ້າຍຈາກ ລບຕ ໃນທົ່ວປະເທດ ທີ່ເກີດຂຶ້ນໃໝ່.

#### 5.1.3. ວຽກງານສຳຫຼວດ ແລະ ກວດກູ້ ລບຕ:

❖ **ຄາດໝາຍ: ສຳຫຼວດບໍ່ແມ່ນວິຊາການ 698 ບ້ານ ແລະ ກວດກູ້ພື້ນທີ່ ລບຕ ຕົກຄ້າງ ໃຫ້ໄດ້ 4,500 ເຮັກຕາ.**

❖ **ໜ້າວຽກ:**

- ສະເໜີຂັ້ນເທິງປະກາດໃຊ້ຄຳສັ່ງນາຍົກ ວ່າດ້ວຍການກວດກູ້ ລບຕ ຢູ່ບັນດາໂຄງການພັດທະນາເສດຖະກິດ-ສັງຄົມຕ່າງໆຢູ່ ສປປ ລາວ.

- ພັດທະນາມາດຕະຖານການສຳຫຼວດບໍ່ແມ່ນວິຊາການ ແລະ ວິຊາການ ທາງດ້ານຂະໜາດຂອງທີມ, ໜ້າວຽກ, ກຳນົດເວລາ, ການຄຸ້ມຄອງຄຸນນະພາບການສຳຫຼວດ ແລະ ແບບຟອມການລາຍງານ.

- ສ້າງລະບົບການບັນທຶກ ແລະ ລາຍງານການສຳຫຼວດ, ການກວດກູ້ ລບຕ ຢູ່ບັນດາແຂວງໃຫ້ມີຄວາມສາມາດເຄື່ອນໄຫວ ແລະ ລາຍງານເຂົ້າຖານຂໍ້ມູນ ລບຕ ແຫ່ງຊາດ.

- ສົມທົບກັບບັນດາກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນ ເພື່ອສ້າງແຜນການກວດກູ້ ລບຕ ໃຫ້ຕິດພັນກັບແຜນພັດທະນາຂອງແຕ່ລະພາກສ່ວນ.

- ປະສານ ແລະ ຊຸກຍູ້ໃຫ້ບັນດາອົງການປະຕິບັດງານ ເພື່ອດຳເນີນການສຳຫຼວດບໍ່ແມ່ນວິຊາການ ແລະ ວິຊາການ ຕາມແຜນການ.

- ປະສານກັບບັນດາອົງການປະຕິບັດງານ ເພື່ອກວດກູ້ພື້ນທີ່ ລບຕ ຕົກຄ້າງຢູ່ຈຸດສຸມພັດທະນາ, ໂຄງການພັດທະນາຕ່າງໆຕາມບູລິມະສິດພັດທະນາແຕ່ລະປີຂອງລັດຖະບານ ແລະ ພື້ນທີ່ທຳມາຫາກິນຂອງປະຊາຊົນລາວບັນດາເຜົ່າ.

- ພັດທະນາເຕັກນິກ, ເຕັກໂນໂລຊີ ແລະ ວິທີການໃນການສຳຫຼວດ, ການກວດກູ້ ແລະ ການທຳລາຍ ລບຕ ກັບບັນດາປະເທດ ແລະ ອົງການສາກົນ.

### 5.2. ຂົງເຂດບໍລິຫານຄຸ້ມຄອງ:

#### 5.2.1. ວຽກງານຂໍ້ມູນຂ່າວສານ:

- ຝຶກອົບຮົມກ່ຽວກັບການບັນທຶກ, ລາຍງານຂໍ້ມູນ ລບຕ ໃຫ້ຫ້ອງການ ຄກລຂ ຢູ່ 11 ແຂວງ.

- ປະກອບຄອມພິວເຕີ້, ສະແກນເນີ້, ເຄື່ອງພິມ, ເຄື່ອງອິນເຕີເນັດ ແລະ ຂໍ້ມູນ ລບຕ ໃຫ້ຫ້ອງການ ຄກລຂ ຢູ່ 11 ແຂວງ

- ສືບຕໍ່ພັດທະນາຂີດຄວາມສາມາດໃຫ້ບັນດາອົງການປະຕິບັດງານ ລວມທັງ ບໍລິສັດກວດກູ້ ລບຕ ໃຫ້ສາມາດເກັບກຳ, ວິເຄາະ, ບັນທຶກ ແລະ ລາຍງານຂໍ້ມູນ ລບຕ ເຂົ້າຖານຂໍ້ມູນ ລບຕ ແຫ່ງຊາດ.

- ຕິດຕາມ, ປະສານງານ, ຊຸກຍູ້ ແລະ ແກ້ໄຂການນຳໃຊ້ຖານຂໍ້ມູນ ລບຕ ແຫ່ງຊາດ ຂອງບັນດາອົງການປະຕິບັດງານ.

**5.2.2. ວຽກແຜນການ ແລະ ປະຊາສໍາພັນ:**

- ປະສານກັບສື່ມວນຊົນ ລົງເກັບກໍາຂ່າວສະພາບການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ຢູ່ບັນດາແຂວງທີ່ມີ ລບຕ 1 ຄັ້ງ.

- ນໍາພາບັນດາຕາງໜ້າປະເທດຜູ້ໃຫ້ທຶນ ລົງຢ້ຽມຢາມສະໜາມກວດກູ້ ລບຕ ເນື່ອງໃນໂອກາດທີ່ມາຮ່ວມກອງປະຊຸມໂຕະມົນປະຈໍາປີຢູ່ ສປປ ລາວ 1 ຄັ້ງ.

- ປັບປຸງສື່ໂຄສະນາຕ່າງໆເຊັ່ນ: ເວບໄຊ໌, ໃບປິວ, ແຜ່ນພັບ, ປື້ມບົດລາຍງານ ແລະ ອື່ນໆ. ພ້ອມທັງເຂົ້າຮ່ວມວາງສະແດງຜົນງານການເຄື່ອນໄຫວວຽກງານ ລບຕ ຢູ່ໃນກອງປະຊຸມຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

- ຈັດພິທີສະເຫຼີມສະຫຼອງວັນຕ້ານລະເບີດຝັງດິນສາກົນ ແລະ ວັນມີຜົນບັງຄັບໃຊ້ສົນທິສັນຍາລະເບີດລູກຫວ່ານທຸກໆປີ.

- ສ້າງແຜນການແຕ່ລະໄລຍະ, ຊຸກຍູ້ຕິດຕາມ ແລະ ລາຍງານໃຫ້ແກ່ລັດຖະບານ ແລະ ປະເທດຜູ້ໃຫ້ທຶນຢ່າງເປັນປົກກະຕິ.

- ຈັດກອງປະຊຸມຕ່າງໆເຊັ່ນ: ກອງປະຊຸມຄະນະຊີ້ນໍາໂຄງການສ້າງຄວາມເຂັ້ມແຂງໃຫ້ຫ້ອງການ ຄຊກລ ແລະ ຄກລ; ກອງປະຊຸມຄະນະຊີ້ນໍາກອງທຶນຊ່ວຍເຫຼືອລ້າ ສໍາລັບວຽກງານແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ; ກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ ແລະ ກອງປະຊຸມເວທີປຶກສາຫາລືວຽກງານແກ້ໄຂບັນຫາ ລບຕ.

**5.2.3. ວຽກງານຮ່ວມມື ແລະ ພົວພັນຕ່າງປະເທດ:**

- ສືບຕໍ່ຄົ້ນຄ້ວາບົດບັນທຶກຄວາມເຂົ້າໃຈຂອງບັນດາອົງການປະຕິບັດງານທີ່ຍື່ນເຂົ້າມາໃໝ່.

- ສະຫຼຸບ, ລາຍງານ ກ່ຽວກັບຜົນການຈັດຕັ້ງປະຕິບັດບັນດາພັນທະນາຂອງສົນທິສັນຍາສາກົນກ່ຽວກັບ ລບຕ ທີ່ ສປປ ລາວ ເປັນພາຄີ.

- ຄົ້ນຄ້ວາສ້າງຮ່າງກົດໝາຍການປະຕິບັດສົນທິສັນຍາ ວ່າດ້ວຍການຕ້ານລະເບີດລູກຫວ່ານຂອງ ສປປ ລາວ.

- ຄົ້ນຄ້ວາສ້າງບົດສະເໜີໂຄງການ ເພື່ອຂໍງົບປະມານແຫ່ງລັດ ແລະ ການຊ່ວຍເຫຼືອຈາກສາກົນ.

- ກະກຽມເອກະສານໃຫ້ການນໍາ ຄຊກລ ເຂົ້າຮ່ວມກອງປະຊຸມປະຈໍາປີຫົວໜ້າອົງການແກ້ໄຂບັນຫາ ລບຕ ຢູ່ເຈນີວາ, ກອງປະຊຸມປະຈໍາປີສົນທິສັນຍາຕ້ານລະເບີດລູກຫວ່ານ, ສົນທິສັນຍາອາວຸດທົ່ວໄປ ແລະ ສົນທິສັນຍາລະເບີດບໍ່ທັນແຕກອື່ນໆ.

- ສືບຕໍ່ປຸກລະດົມທຶນເຂົ້າໃນວຽກງານແກ້ໄຂບັນຫາ ລບຕ ໃຫ້ໄດ້ 22,3 ລ້ານໂດລາ ສຫລ.

+ ສໍາຫຼວດບໍ່ແມ່ນວິຊາການຢູ່ 698 ບ້ານ ເພື່ອຊອກຫາຈຸດຫຼັກຖານ ລບຕ ໂດຍຈະໃຊ້ 34 ທີມທີ່ມີຢູ່ໃນປະຈຸບັນ ແລະ ຈະໃຊ້ງົບປະມານ ຈໍານວນ 1,2 ລ້ານໂດລາ ສຫລ.

+ ສໍາຫຼວດວິຊາການເພື່ອຊອກຫາພື້ນທີ່ ລບຕ ຕົກຄ້າງຕາມຈຸດຫຼັກຖານທີ່ໄດ້ຈາກການສໍາຫຼວດບໍ່ແມ່ນວິຊາການຢູ່ 256 ບ້ານ ໂດຍຈະໃຊ້ 64 ທີມທີ່ມີຢູ່ໃນປະຈຸບັນ ແລະ ຈະໃຊ້ງົບປະມານຈໍານວນ 6,1 ລ້ານໂດລາ ສຫລ.

+ ກວດກູ້ພື້ນທີ່ ລບຕ ຕົກຄ້າງຈໍານວນ 4,500 ເຮັກຕາ ໂດຍຈະໃຊ້ງົບປະມານ 10,3 ລ້ານໂດລາ ສຫລ.

+ ຊ່ວຍເຫຼືອສ້າງເສດຖະກິດຄອບຄົວໃຫ້ຜູ້ຖືກເຄາະຮ້າຍຈາກ ລບຕ 300 ຄົນ ຈະໃຊ້ງົບປະມານຈໍານວນ 450,000 ໂດລາ ສຫລ.

+ ໂຄສະນາທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ ຢູ່ບັນດາແຂວງທີ່ມີຜົນກະທົບຈາກ ລບຕ ໃນທົ່ວປະເທດ ຈະໃຊ້ງົບປະມານຈໍານວນ 1 ລ້ານໂດລາ ສຫລ.

+ ສ້າງຄວາມເຂັ້ມແຂງໃຫ້ກອງເກັບກູ້ລະເບີດມະນຸດສະທໍາ 5 ທີມຈະໃຊ້ງົບປະມານ 750,000 ໂດລາ ສຫລ.

+ ຄົ້ນຄ້ວາອອກແບບສ້າງສູນຝຶກອົບຮົມ ລບຕ ແຫ່ງຊາດ ຈະໃຊ້ງົບປະມານຈໍານວນ 25,000 ໂດລາ ສຫລ.

+ ງົບປະມານບໍລິຫານຫ້ອງການ ຄຊກລ ຈະໃຊ້ງົບປະມານ ຈໍານວນ 2,5 ລ້ານໂດລາ ສຫລ.

**5.2.4. ວຽກງານຄຸ້ມຄອງຄຸນນະພາບ ແລະ ຝຶກອົບຮົມ:**

- ທົບທວນ ແລະ ປັບປຸງມາດຕະຖານແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາ ລບຕ ມາດຕາ 2 ກ່ຽວກັບການອະນຸມັດໃບຢັ້ງຢືນໃຫ້ອົງການປະຕິບັດງານ.
- ກວດກາຄຸນນະພາບການປະຕິບັດງານສໍາຫຼວດ, ກວດກູ້ ແລະ ທໍາລາຍ ລບຕ ຂອງອົງການປະຕິບັດງານ 18 ຄັ້ງ.
- ຄົ້ນຄ້ວາອອກ ແລະ ຕໍ່ໃບຢັ້ງຢືນໃຫ້ອົງການປະຕິບັດງານ.
- ປັບປຸງຫຼັກສູດວິຊາການການກວດກູ້ ຂັ້ນ 1-4, ແພດ, ສໍາຫຼວດ ແລະ ໂຄສະນາທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ.
- ຝຶກອົບຮົມກອງເກັບກູ້ລະເບີດມະນຸດສະທໍາຂອງກອງທັບໃນການສໍາຫຼວດ ແລະ ກວດກູ້ ລບຕ 5 ທີມ.
- ຄຸ້ມຄອງການຝຶກອົບຮົມກ່ຽວກັບການສໍາຫຼວດ ແລະ ກວດກູ້ ລບຕ ຂອງບັນດາອົງການປະຕິບັດງານ.
- ຄົ້ນຄ້ວາອອກແບບການສ້າງສູນຝຶກອົບຮົມ ລບຕ ແຫ່ງຊາດ.

**5.2.5. ວຽກການຈັດຕັ້ງ ແລະ ປະສານງານ:**

- ກໍານົດຄວາມຮັບຜິດຊອບໃຫ້ບັນດາກໍາມະການ ຄຊກລ ຢູ່ບັນດາກະຊວງ ແລະ ອົງການທຽບເທົ່າໃຫ້ຈະແຈ້ງ.
- ປັບປຸງລະບອບແບບແຜນວິທີເຮັດວຽກຂອງ ຄຊກລ ໂດຍສະເພາະເນັ້ນໃສ່ໃຫ້ມີລະບອບປະຊຸມແຕ່ລະໄລຍະຢ່າງເປັນປົກກະຕິ. ພ້ອມນັ້ນ, ກໍ່ປັບປຸງໃຫ້ມີການນໍາຂອງ ຄຊກລ ເຮັດວຽກປະຈໍາການ 1 ທ່ານ ແລະ ສ້າງຈຸດປະສານງານວຽກງານແກ້ໄຂບັນຫາ ລບຕ ຢູ່ບັນດາກະຊວງ ແລະ ອົງການທຽບເທົ່າ ຕາມດໍາລັດ 043/ລບ, ລົງວັນທີ 3 ກຸມພາ 2015.
- ປັບປຸງຫ້ອງການຊ່ວຍວຽກ (ຫ້ອງການ ຄຊກລ) ໃຫ້ສາມາດເຄື່ອນໄຫວເປັນເສນາທິການ, ປະສານງານ ແລະ ບໍລິການວຽກງານແກ້ໄຂບັນຫາ ລບຕ ໃຫ້ຄ່ອງຕົວກວ່າເກົ່າ; ປັບປຸງພາລະບົດບາດຂອງ ຄກລ ແນໃສ່ໃຫ້ ຄກລ ເຄື່ອນໄຫວຢູ່ພາຍໃຕ້ການຄຸ້ມຄອງ ຄຊກລ.
- ປັບປຸງການຈັດຕັ້ງຄຸ້ມຄອງແກ້ໄຂບັນຫາ ລບຕ ແລະ ຫ້ອງການຊ່ວຍຂອງການຈັດຕັ້ງດັ່ງກ່າວຢູ່ບັນດາແຂວງທີ່ມີ ລບຕ ໃຫ້ຈະແຈ້ງ, ມີບຸກຄະລາກອນ, ມີລະບອບແບບແຜນວິທີເຮັດວຽກ ແລະ ມີງົບປະມານເຄື່ອນໄຫວ.
- ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານກໍາມະກອນລາວທົ່ວຂະແໜງການ ເພື່ອຮັບປະກັນເຊື່ອໝັ້ນຕໍ່ການນໍາພາຂອງພັກ ແລະ ປະຕິບັດລະບຽບກົດໝາຍ ແລະ ທິດທາງແຜນການຂອງລັດເປັນຢ່າງດີ. ຄຸ້ມຄອງຊ່ຽວຊານຕ່າງປະເທດໃຫ້ເຂົ້າໃຈແນວທາງນະໂຍບາຍ ແລະ ທິດທາງແຜນການຂອງລັດຖະບານ, ສະໜັບສະໜູນພວກເຮົາຢ່າງສະເໝີຕົ້ນສະເໝີປາຍ.

**IV. ວິໄສທັດ ຮອດປີ 2030.**

ໃນກອງປະຊຸມສຸດຍອດອາຊຽນຄັ້ງທີ 28-29 ທີ່ຈັດຂຶ້ນທີ່ນະຄອນຫຼວງວຽງຈັນ ລັດຖະບານ ສປປ ລາວເປັນເຈົ້າພາບນັ້ນ ທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ ແລະ ທ່ານເລຂາທິການໃຫ່ຍອົງການສະຫະປະຊາຊາດໄດ້ປະກາດຮັບຮອງເອົາ “ຊີວິດປອດໄພຈາກລະເບີດບໍ່ທັນແຕກ” ເປັນເປົ້າໝາຍການພັດທະນາແບບຍືນຍົງ ອັນດັບ 18. ຄາດໝາຍດັ່ງກ່າວ ໄດ້ກາຍເປັນວິໄສທັດຂອງວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ຮອດປີ 2030, ຊຶ່ງພາຍໃນປີ 2030 ຕ້ອງຮັບປະກັນໃຫ້ຈໍານວນຜູ້ຖືກບາດເຈັບ ແລະ ເສຍຊີວິດຈາກ ລບຕ

ໃນແຕ່ລະປີຫຼຸດລົງເທື່ອລະກ້າວຈົນຮອດຈຸດຕໍ່າສຸດ; ສໍາເລັດການກວດກູ້ ລບຕ ຢູ່ບັນດາພື້ນທີ່ບູລິມະສິດພັດທະນາ ແລະ ບັນດາບ້ານທີ່ທຸກຍາກ ແລະ ຮັບປະກັນໃຫ້ຜູ້ລອດຊີວິດຈາກ ລບຕ ໄດ້ຮັບການຊ່ວຍເຫຼືອທາງດ້ານການປິ່ນປົວ, ຟື້ນຟູສຸຂະພາບ ແລະ ປະກອບອາຊີບ.

ເພື່ອສາມາດບັນລຸໄດ້ວິໄສທັດຂ້າງເທິງ ຄຊກລ ໄດ້ວາງຍຸດທະສາດໂດຍອີງໃສ່ 4 ເສົ້າຄໍ້າດັ່ງລຸ່ມນີ້:

1. ສົ່ງເສີມໃຫ້ພາກລັດ ແລະ ເອກະຊົນຂອງລາວ ແລະ ຕ່າງປະເທດ ດໍາເນີນການໂຄສະນາກ່ຽວກັບທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ, ຊຶ່ງຈະຕ້ອງໄດ້ສິດສອນຫຼັກສູດ ລບຕ ຢູ່ບັນດາໂຮງຮຽນປະຖົມ ແລະ ໂຄສະນາທີ່ມາ ແລະ ຄວາມອັນຕະລາຍຂອງ ລບຕ ໃຫ້ກວມລວມທົ່ວປະເທດ.

2. ສົ່ງເສີມໃຫ້ພາກລັດ ແລະ ເອກະຊົນຂອງລາວ ແລະ ຕ່າງປະເທດ ດໍາເນີນການຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ, ຊຶ່ງໃນນີ້ ຈະໄດ້ສຸມໃສ່ການປິ່ນປົວການແພດ, ຟື້ນຟູສຸຂະພາບກາຍ, ຈິດຕະສັງຄົມ ແລະ ປະກອບອາຊີບໃຫ້ຜູ້ລອດຊີວິດຈາກ ລບຕ.

3. ດໍາເນີນການສໍາຫຼວດບໍ່ແມ່ນວິຊາການ ເພື່ອຊອກຫາຈຸດຫຼັກຖານ ລບຕ ຈາກນັ້ນ ກໍ່ສໍາຫຼວດວິຊາການເພື່ອກໍານົດພື້ນທີ່ ລບຕ ຕົກຄ້າງໃນຂອບເຂດທົ່ວປະເທດ. ພ້ອມນັ້ນ, ກໍ່ດໍາເນີນການກວດກູ້ ລບຕ ຮັບໃຊ້ຈຸດສຸມພັດທະນາຂອງສູນກາງ ແລະ ທ້ອງຖິ່ນ, ໂຄງການສ້າງບ້ານໃຫຍ່ໃຫ້ເປັນຕົວເມືອງນ້ອຍໃນຊົນນະບົດ ແລະ ເຂດທໍາມາຫາກິນຂອງປະຊາຊົນລາວບັນດາເຜົ່າ.

4. ດໍາເນີນການປັບປຸງການຈັດຕັ້ງບໍລິຫານຄຸ້ມຄອງ, ສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນ, ປັບປຸງລະບົບການປະສານງານ, ການລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ ແລະ ຄຸ້ມຄອງນໍາໃຊ້ທຶນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

